ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23 ກໍລະກົດ 2024
ປີທີ 13
ສະບັບທີ 978
ລາຍສັບປະດາ

## ປະທານສະພາແຫ່ງຊາດ ພົບປະປະທານປະເທດຫວຽດນາມ



(ສພຊ) - ຕອນບ່າຍວັນທີ 11 ກໍລະກົດນີ້ ທີ່ສະພາແຫ່ງຊາດ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ພົບປະກັບສະຫາຍ ໂຕ ເລີມ (Tô Lâm) ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານປະເທດ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງແຫ່ງ ສສ.ຫວຽດນາມ ໃນໂອກາດຢ້ຽມຢາມທາງລັດຖະກິດຢູ່ ສປປ ລາວ ລະຫວ່າງວັນທີ 11-12 ກໍລະກົດ 2024 ຕອບສະໜອງຕາມຄຳເຊີນຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ທັງເປັນການເພີ່ມທະວີ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ກໍຄືປະຊາຊົນສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ໃຫ້ຈະເລີນງອກງາມ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ໃນການພົບປະ, ສະຫາຍ ປອ. ໄຊສົມພອນ ພົມວິຫານ

ອ່ານຕໍ່ໜ້າ 11




## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນມິຖຸນາ 2024

(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນມິຖຸນາ 2024 ໄດ້ດຳເນີນໃນລະຫວ່າງວັນທີ08-10 ກໍລະກົດ 2024 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ,ກົດໝາຍ ເປັນຕົ້ນ ການສະເໜີຂອງລັດຖະບານກ່ຽວກັບການຫັນປ່ຽນທີ່ດິນປ່າໄມ້ທຳມະຊາດ ໄປເປັນດິນປະເພດອື່ນ ແລະ ຂໍຍົກເວັ້ນຄ່າທຳນຽມໃນການຫັນປ່ຽນທີ່ດິນປ່າໄມ້ຢູ່ເຂດບ້ານປັກແຮດ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ເພື່ອສ້າງຕັ້ງໂຮງຮຽນເຫຼົ່າຮົບ; ລາຍງານຄວາມຄືບໜ້າການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ການສະເໜີແຕ່ງຕັ້ງຜູ້ພິພາກສາ ແລະ ຮອງປະທານສານປະຊາຊົນທ້ອງຖິ່ນ, ການສະເໜີຮັບຮອງເອົາການສ້າງຕັ້ງສານປະຊາຊົນເຂດ II ແຂວງເຊກອງ ຕາມໜັງສືສະເໜີຂອງສານປະຊາຊົນສູງສຸດ; ລາຍງານຜົນການຄົ້ນຄວ້າໜັງສືສະເໜີການປັບປຸງຮ່າງດຳລັດວ່າດ້ວຍການຄຸ້ມຄອງທຸລະກິດກາຊີໂນ; ລາຍງານບາງເນື້ອໃນຂອງກົດໝາຍ\ທີ່ຕິດພັນກັບກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; ລາຍງານການກະກຽມຮອບດ້ານໃຫ້ແກ່ການເປັນເຈົ້າພາບ

ອ່ານຕໍ່ໜ້າ 8

## ສະຫາຍ ປອ. ໄຊສົມພອນ ພົມວິຫານ ຕ້ອນຮັບ ຮອງປະທານສະພາແຫ່ງຊາດຫວຽດນາມ



(ສພຊ) - ວັນທີ 04 ກໍລະກົດ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງສະຫາຍ ຫງວຽນ ຄັກ ດິ້ງ (Nguyễn Khắc Định) ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ.

ອ່ານຕໍ່ໜ້າ 4

## ປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ສະບັບປີ 2015




(ສພຊ) - ກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 10 ກໍລະກົດ 2024 ທີ່ໂຮງແຮມເມືອງແທ່ງ ໂດຍການເປັນປະທານຮ່ວມຂອງ ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ຮອງນາຍົກລັດຖະມົນຕີ, ຮອງປະທານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ) ແລະ ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຜູ້ປະຈຳການຄະນະປະຈຳການຄລຊ; ມີບັນດາທ່ານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນປີ2015, ກອງເລຂາ ແລະ ອະນຸກຳມະການຕ່າງໆຂອງຄລຊ, ບັນດາການນຳແລະພະນັກງານຫຼັກແຫຼ່ງຈາກກະຊວງ, ອົງການ ເຂົ້າຮ່ວມຫຼາຍກວ່າ 150 ທ່ານ.

ທ່ານ ສຈ. ປອ. ກິແກ້ວ ໄຂຄຳພິທູນ ມີຄຳເຫັນກ່າວເປີດກອງປະຊຸມວ່າ: ວັນທີ 20 ມິຖຸນາຜ່ານມາ ພວກເຮົາໄດ້ສຳເລັດການປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນຢູ່ຂົງເຂດອົງການພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ. ມື້ນີ້ ພວກເຮົາພ້ອມກັນດຳເນີນກອງປະຊຸມປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນໃນຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ ເຊິ່ງເປັນຈຸດທີ 2 ອ້ອມຂ້າງສູນກາງ; ຈຸດປະສົງແມ່ນສະ

ອ່ານຕໍ່ໜ້າ 11

## ມອບ-ຮັບໜ້າທີ່ລະຫວ່າງບັນດາ ປະທານກຳມາທິການສະພາແຫ່ງຊາດ



(ສພຊ) - ຕອນເຊົ້າວັນທີ 10 ກໍລະກົດ 2024, ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບໜ້າທີ່ລະຫວ່າງປະທານກຳມາທິການຍຸຕິທຳ ຜູ້ເກົ່າ ກັບ ຜູ້ໃໝ່ ແລະ ປະທານກຳມາທິການວັດທະນະທຳ-ສັງຄົມ ຜູ້ເກົ່າ ກັບ ຜູ້ໃໝ່ ໂດຍມີການເຂົ້າຮ່ວມເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ບັນດາທ່ານການນຳຂັ້ນສູງຈາກກະຊວງ, ອົງການທີ່ກ່ຽວຂ້ອງ ແລະ ແຂກຖືກເຊີນ ເຂົ້າຮ່ວມເປັນສັກຂີພະຍານຢ່າງຫຼວງຫຼາຍ.

ໃນພິທີ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ຜູ້ເກົ່າ ແລະ ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ຜູ້ເກົ່າ ໄດ້ລາຍງານໂດຍສັງເຂບ

ອ່ານຕໍ່ໜ້າ 11

# ກອງປະຊຸມສະໄໝສາມັນເທື່ອທີ 7 ສປນວ ຊຸດທີ II ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ




(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ດຳເນີນມາເປັນເວລາ 04 ວັນເຄິ່ງ ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໃນຕອນສວາຍວັນທີ 12 ກໍລະກົດນີ້ ທີ່ຫ້ອງປະຊຸມຂອງຫ້ອງວ່າການນະຄອນຫຼວງວຽງຈັນ (ນວ) ພາຍໃຕ້ການເປັນປະທານຂອງທ່ານ ອານຸພາບ ຕຸນາລົມ ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ; ມີທ່ານອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານການນຳພັກ-ລັດຂັ້ນ ນວ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາ ຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ພ້ອມດ້ວຍບັນດາພະແນກການ, ຂະແໜງການກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງນະຄອນຫຼວງວຽງຈັນດັ່ງນີ້:

1. ບົດລາຍງານຂອງອົງການປົກຄອງນະຄອນຫຼວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024 ຕິດພັນກັບການກະກຽມຄວາມພ້ອມໃນການເປັນເຈົ້າພາບການດຳເນີນກອງປະຊຸມອາຊຽນ;

2. ບົດລາຍງານການຈັດຕັ້ງປະຕິບັດບັນດາຄາດໝາຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;

3. "ຮ່າງ" ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ໃຕ້;

4. ບົດລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສປນວ ຊຸດທີ II ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານປີ 2023 ແລະ ແຜນການຈຸດສຸມປີ 2024 ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ພາກກາງ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ນະຄອນຫຼວງວຽງຈັນສະບັບເລກທີ 005/ສປນວ, ລົງວັນທີ 10 ມັງກອນ 2024 ໃນໄລຍະ 6 ເດືອນຕົ້ນປີ 2024;

5. ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024 ຂອງສະພາປະຊາຊົນນະຄອນຫຼວງ ຕິດພັນກັບແຜນການເຄື່ອນໄຫວພົບປະປະຊາຊົນ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ແລະ ຂອງ ສປນວ ຊຸດທີ II.

ກອງປະຊຸມໄດ້ຮັບຟັງການລາຍງານບາງບັນຫາສຳຄັນຂອງນະຄອນຫຼວງວຽງຈັນດັ່ງນີ້:

1. ການຈັດຕັ້ງປະຕິບັດ ແລະ ການຊົດເຊີຍໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 230 ກິໂລໂວນ ແຕ່ສະຖານີເຜຍລາດ-ສະຖານີໄຟຟ້ານາຊາຍທອງ;

2. ມາດຕະການໃນການຈັດຕັ້ງປະຕິບັດວຽກງານ ສ.ສະຫວ່າງ;

3. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດເລກທີ 13 ເໜືອ ຊ້ວງສາມແຍກສີໄຄ-ສີເກີດ;

4. ມາດຕະການຕ້ານ ແລະ ແກ້ໄຂບັນຫານ້ຳຖ້ວມຂັງ;

5. ການດຳເນີນການຈັດຕັ້ງປະຕິບັດການຜັນຂະຫຍາຍ ແລະ ຊຸກຍູ້ສົ່ງເສີມການທ່ອງທ່ຽວ;

6. ການຈັດຕັ້ງປະຕິບັດການຊົດເຊີຍໃຫ້ປະຊາຊົນທີ່ຖືກຜົນກະທົບຈາກໂຄງການພັດທະນາເນື້ອທີ່ດິນ 51.1 ເຮັກຕາ ຂອງໂຄງການທ່າບົກ-ທ່ານາແລ້ງ ແລະ ເຂດໂລຈິສຕິກ;

7. ມາດຕະການຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າໃຫ້ສາມາດຕອບສະໜອງສະບຽງອາຫານ ແລະ ສະກັດກັ້ນການນຳເຂົ້າສິນຄ້າຈາກພາຍນອກ;

8. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດການລົບລ້າງໃບຕາດິນ 16 ຕອນ ທີ່ນອນໃນເຂດໂຄງການພັດທະນາ ສຳປະທານບຶງສາລາຄຳຂອງບໍລິສັດ ມິດຕະພາບ ພັດທະນາການກະເສດ ຈຳກັດ ຢູ່ເມືອງຫາດຊາຍທອງ;

9. ການເກັບກຳຂໍ້ມູນການບຸກລຸກຈັບຈອງ ແລະ ອອກໃບຕາດິນ ຢູ່ເຂດປ່າສະຫງວນແຫ່ງຊາດພູພະນັງ;

10. ວຽກງານທີ່ຕິດພັນກັບກອງບັນຊາການປ້ອງກັນຄວາມສະຫງົບນະຄອນຫຼວງ;

11. ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄລຍະ 6 ເດືອນຕົ້ນປີ 2024 ແລະການຈັດຕັ້ງປະຕິບັດດຳລັດສະບັບເລກທີ 280/ນຍ, ລົງວັນທີ 09 ສິງຫາ 2022 ວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ.

ນອກຈາກນີ້, ຍັງໄດ້ຮັບຟັງການຊີ້ແຈງບາງບັນຫາສຳຄັນຈຳນວນໜຶ່ງທີ່ພົວພັນກັບສະພາບພົ້ນເດັ່ນຂອງສັງຄົມ ແລະ ຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນ ເຊິ່ງຜູ້ແທນໄດ້ຊັກຖາມ ແລະຍົກຂຶ້ນໃນກອງປະຊຸມຈາກອົງການປົກຄອງ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ. ຕໍ່ບັນຫາທີ່ໄດ້ມີການລາຍງານ ແລະ ຊີ້ແຈງທີ່ກ່າວມານັ້ນ, ກອງປະຊຸມໄດ້ມອບໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາເນື້ອໃນ, ວິທີການ, ມາດຕະການໃນການຈັດຕັ້ງປະຕິບັດ ແລະ ແກ້ໄຂບາງບັນຫາຕ່າງໆທີ່ໄດ້ລາຍງານ, ຊີ້ແຈງແຕ່ລະຫົວຂໍ້ ແລະ ໃຫ້ຄຳໝັ້ນສັນຍາໃນກອງປະຊຸມຄັ້ງນີ້ ໃຫ້ມີປະສິດທິຜົນ ແລະ ມີຜົນສັກສິດ ພ້ອມທັງມີການລາຍງານຄືນໃຫ້ສະພາປະຊາຊົນນະຄອນຫຼວງວຽງຈັນ ເປັນລາຍລັກອັກສອນ ເພື່ອຈະສືບຕໍ່ຕິດຕາມກວດກາຢ່າງໃກ້ຊິດຕື່ມອີກ.

ເພື່ອສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຜົນສຳເລັດກອງປະຊຸມຄັ້ງນີ້, ກອງປະຊຸມຮຽກຮ້ອງມາຍັງຄະນະປະຈຳສະພາປະຊາຊົນ, ບັນດາຄະນະກຳມະການ, ຄະນະເລຂາທິການ, ອົງການປົກຄອງ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ສສຊ ປະຈຳເຂດເລືອກຕັ້ງທີ 1, ສສນວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຜັນຂະຫຍາຍບັນດາມະຕິທີ່ໄດ້ຮັບຮອງ ເຂົ້າໃນການປະຕິບັດວຽກໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**(ກົງທະນູຄຳ ພິພັດເສລີ)**

# ສພຊ ຈັດເຝິກອົບຮົມວຽກງານກວດກາພັກ-ລັດ ແລະ ຕ້ານການສໍ້ລາດບັງຫຼວງ



(ສພຊ) - ຕອນເຊົ້າວັນທີ 05 ກໍລະກົດ 2024, ຄະນະກວດກາພັກ-ລັດສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມເຝິກອົບຮົມວຽກງານກວດກາ ໃຫ້ແກ່ປະທານ, ຮອງປະທານ ແລະ ຜູ້ເຮັດວຽກກວດກາຂອງບັນດາຮາກຖານພັກ, ໜ່ວຍພັກ ແລະ ອົງການຈັດຕັ້ງມະຫາຊົນພາຍໃນສພຊ ໂດຍການເປັນປະທານໃນພິທີເປີດຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ມີສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຄະນະບໍລິຫານງານພັກ, ເລຂາຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ; ສະຫາຍ ນາງ ທຸມມາລີ ວົງພະຈັນ ກຳມະການຄະນະບໍລິຫານງານພັກ, ຮອງປະທານຄະນະກວດກາພັກ-ລັດສະພາແຫ່ງຊາດ, ສະຫາຍ ປອ. ດາວບົວລະພາ ບາວົງເພັດ ຮອງປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ພ້ອມດ້ວຍບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະໜ່ວຍພັກຮາກຖານ, ຄະນະພັກຮາກຖານຄະນະເລຂາທິການ, ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ຕາງໜ້າ 3 ອົງການຈັດຕັ້ງມະຫາຊົນພາຍໃນສພຊ, ບັນດາສະຫາຍຜູ້ເຂົ້າຮ່ວມເຝິກອົບຮົມ ແລະ ພະນັກງານຈາກກົມທີ່ກ່ຽວຂ້ອງຂອງຄະນະກວດກາສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງການເຝິກອົບຮົມໄລຍະ 10 ວັນຄັ້ງນີ້ແມ່ນເພື່ອຍົກລະດັບຄວາມຮູ້, ຄວາມເຂົ້າໃຈຢ່າງຖືກຕ້ອງ ກ່ຽວກັບຄວາມຮູ້ພື້ນຖານຂອງວຽກງານຕິດຕາມກວດກາ, ສ້າງຄວາມເຂົ້າໃຈແຈ້ງຕໍ່ບັນດາມະຕິກ່ຽວກັບກອງປະຊຸມໃຫຍ່ຂອງພັກ, ແຈ້ງການ, ບົດແນະນຳຂອງຄະນະກວດກາສູນກາງພັກ ແລະ ບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນການເຄື່ອນໄຫວວຽກງານວິຊາສະເພາະກວດກາ; ແນໃສ່ບຳລຸງສ້າງຜູ້ເຮັດວຽກກວດກາໃຫ້ມີທັດສະນະຫຼັກໝັ້ນ, ປະຕິບັດໜ້າທີ່ເພື່ອຮັບໃຊ້ພັກ, ຮັບໃຊ້ລັດ ແລະ ຮັບໃຊ້ປະຊາຊົນ, ມີຄວາມໜັກແໜ້ນດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ, ຈັນຍາທຳ ແລະ ມີວິໄສທັດທີ່ຖືກຕ້ອງຕາມແນວທາງຂອງພັກ ແລະ ນະໂຍບາຍຂອງລັດ; ເພີ່ມທະວີຂີດຄວາມຮູ້ຄວາມສາມາດໃນການຈັດຕັ້ງປະຕິບັດວຽກງານກວດກາໃຫ້ດີຂຶ້ນກວ່າເກົ່າ, ເຂົ້າໃຈແຈ້ງ, ສາມາດກຳສະພາບ ແລະ ເຮັດບົດສະຫຼຸບລາຍງານປະຈຳເດືອນ, ງວດ ແລະປີ ຂອງຂັ້ນຕົນໄດ້ຢ່າງຖືກຕ້ອງ, ສອດຄ່ອງ, ພາວະວິໄສ ແລະ ເປັນປົກກະຕິທັງເປັນການເສີມຂະຫຍາຍຢ່າງຕັ້ງໜ້າໃນການສ້າງຄວາມເຂັ້ມແຂງໃນກິງຈັກວຽກງານກວດກາໃຫ້ມີຄວາມໜັກແໜ້ນຂຶ້ນຕື່ມ.

ໃນການເຝິກອົບຮົມຄັ້ງນີ້, ຈະໄດ້ມີການບັນລະຍາຍເອກະສານທີ່ກ່ຽວຂ້ອງກັບວຽກງານກວດ ກາ ຈຳນວນ 15 ຫົວບົດ ເຊິ່ງຈະເປັນຄວາມຮູ້ພື້ນຖານໃຫ້ແກ່ຜູ້ເຝິກອົບຮົມ.

ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ວຽກງານກວດກາມີຄວາມສຳຄັນເປັນສິ່ງຕັດສິນຜົນສຳເລັດແລະປະສິດທິຜົນໃນການປະຕິບັດໜ້າທີ່ວຽກງານຂອງອົງການຈັດຕັ້ງຂັ້ນຕ່າງໆ ເຊິ່ງພັກໄດ້ມີທັດສະນະວ່າ ຖ້າບໍ່ມີການກວດກາກໍໝາຍຄວາມວ່າບໍ່ມີການນຳພາ. ໂດຍເຫັນໄດ້ຄວາມໝາຍຄວາມສຳຄັນຂອງວຽກງານກວດກາ, ຄະນະບໍລິຫານງານພັກ ກໍຄືຄະນະປະຈຳພັກສະພາແຫ່ງຊາດ ຈຶ່ງໄດ້ຕົກລົງໃຫ້ຄະນະກວດກາພັກ-ລັດສະພາແຫ່ງຊາດ ດຳເນີນກອງປະຊຸມເຝິກອົບຮົມໃນຄັ້ງນີ້; ຕະຫຼອດໄລຍະເວລາຕັ້ງແຕ່ກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IV ຂອງອົງຄະນະພັກສະພາແຫ່ງຊາດໃນປີ 2022 ມາເຖິງປັດຈຸບັນ, ຄະນະກວດກາພັກ-ລັດຂອງສະພາແຫ່ງຊາດ ແລະ ບັນດາສະຫາຍທີ່ຮັບຜິດຊອບວຽກງານກວດກາຂອງຮາກຖານພັກ ກໍຄືບັນດາໜ່ວຍພັກຮາກຖານ ແລະ ອົງການຈັດຕັ້ງມະຫາຊົນຢູ່ພາຍໃນສະພາແຫ່ງຊາດ ໄດ້ສຸມທຸກສະຕິປັນຍາ ແລະ ຄວາມສາມາດໃນການເຮັດໜ້າວຽກງານກວດກາພັກ-ລັດ ຕາມການມອບໝາຍຈາກຂັ້ນເທິງ ແລະ ມີຫົວຄິດປະດິດສ້າງເປັນຢ່າງດີດ້ວຍການຮຽນຮູ້ແລະສຶກສາຕາມກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI, ມະຕິ ແລະ ແຈ້ງການຕ່າງໆຂອງພັກ ແລະ ອົງການກວດກາສູນກາງພັກ ແລະ ການຜັນຂະຫຍາຍເອົາທິດທາງຈາກບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳແຕ່ລະປີ ແລະ ການວາງທິດທາງແຜນການໃນແຕ່ລະປີຂອງອົງການກວດກາສູນກາງພັກ ແລະ ຂອງຄະນະກວດກາພັກ-ລັດສະພາແຫ່ງຊາດ.

ໃນຕອນທ້າຍ, ສະຫາຍຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ຮຽກຮ້ອງບັນດາຜູ້ເຂົ້າຮ່ວມເຝິກອົບຮົມ ຈົ່ງເອົາໃຈໃສ່ເຂົ້າຮ່ວມຕາມກຳນົດເວລາ, ຕັ້ງໃຈຮັບຟັງການບັນລະຍາຍຖ່າຍທອດບົດຮຽນຈາກວິທະຍາກອນ ເພື່ອຍົກສູງປະສິດທິພາບໃນການປະຕິບັດໜ້າທີ່ຕິດຕາມກວດກາຂອງບັນດາຮາກຖານໃນຕໍ່ໜ້າ.

**(ພາບ: ນາງ ອານິຕາ ມ່ວນສະຫວັດ ແລະ ຂ່າວ: ນາງ ສຸພາວັນ ທອມສະນິດ)**



# ສອງຮອງປະທານສະພາແຫ່ງຊາດ ລາວ-ຫວຽດນາມ ພົບປະສອງຝ່າຍ



(ສພຊ) - ພິທີພົບປະສອງຝ່າຍລະຫວ່າງສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ກັບສະຫາຍ ຫງວຽນ ຄັກ ດິ້ງ (Nguyễn Khắc Định) ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຂອງສອງຝ່າຍ ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 04 ກໍລະກົດ 2024 ທີ່ຫໍສະພາແຫ່ງຊາດ.

ໃນການພົບປະ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ຕີລາຄາສູງຕໍ່ການຈັດກອງປະຊຸມສຳມະນາວິທະຍາສາດຮ່ວມກ່ຽວກັບບົດຮຽນການປັບປຸງລັດຖະທຳມະນູນແລະການຄົ້ນຄວ້າດ້ານນິຕິບັນຍັດຂອງສອງຝ່າຍ ໂດຍສະເພາະແມ່ນກອງປະຊຸມໃນຄາບເຊົ້າມື້ນີ້ ທີ່ເຕັມໄປດ້ວຍເນື້ອໃນ, ປະສົບການ ແລະ ບົດຮຽນອັນອຸດົມສົມບູນ ໃຫ້ແກ່ສະພາແຫ່ງຊາດລາວ ໃນການກະກຽມປັບປຸງລັດຖະທຳມະນູນ ແລະຈະສືບຕໍ່ກອງປະຊຸມສຳມະນາຫົວຂໍ້ທີສອງ ໃນມື້ອື່ນ. ໃນໄລຍະຜ່ານມາ ສອງຊາດລາວ-ຫວຽດນາມ ໄດ້ເພີ່ມທະວີຣັດແໜ້ນສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານທີ່ໄດ້ຮັບການສ້າງຕັ້ງແລະຖະນຸຖະໜອມໂດຍຮຸ່ນການນຳທຳອິດ ຂອງສອງປະເທດ ແລະ ປັດຈຸບັນ ໄດ້ກາຍເປັນມໍລະດົກລວມລ້ຳຄ່າ, ເປັນກົດເກນແຫ່ງການຄົງຕົວແລະຂະຫຍາຍຕົວ, ແລະ ເປັນປັດໄຈແຫ່ງໄຊຊະນະຂອງການປະຕິວັດຂອງແຕ່ລະປະເທດ; ສຳລັບການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມກໍໄດ້ຮັບການເສີມຂະຫຍາຍທາງກວ້າງ ແລະ ທາງເລິກສະເໝີມາ ເຊິ່ງໃນໄລຍະມໍ່ໆມານີ້ ສອງສະພາແຫ່ງຊາດ ໄດ້ມີການແລກປ່ຽນສານຊົມເຊີຍ, ສານອວຍພອນ ໃນໂອກາດວັນສຳຄັນຕ່າງໆ, ແລກປ່ຽນການຢ້ຽມຢາມຂອງການນຳຂັ້ນສູງໃນລະດັບຂັ້ນປະທານສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການ, ສະມາຊິກສະພາແຫ່ງຊາດ ຕະຫຼອດຮອດຂັ້ນວິຊາການນຳກັນ.

ສະຫາຍຮອງປະທານສະພາແຫ່ງຊາດລາວຍັງໄດ້ກ່າວສະແດງຄວາມຊົມເຊີຍ ແລະ ຂອບໃຈຕໍ່ກັບການສະເໜີຂອງສະພາແຫ່ງຊາດຫວຽດນາມ ໃນການສ້າງປຶ້ມ 50 ປີ ແຫ່ງ ສາຍພົວພັນລະຫວ່າງສອງສະພາແຫ່ງຊາດລາວ-ຫວຽດນາມ ແລະ ແຈ້ງໃຫ້ຊາບວ່າ ປັດຈຸບັນນີ້ ພວມດຳເນີນປັບປຸງລັດຖະທຳມະນູນໃຫ້ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່; ພ້ອມນີ້ການສ້າງປຶ້ມ "50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ, ການຮ່ວມມືຮອບດ້ານ ແລະ ພັດທະນາ" ພວມດຳເນີນຂັ້ນຕອນການຂຽນປຶ້ມດັ່ງກ່າວ. ເພື່ອສືບຕໍ່ພົວພັນຮ່ວມມືລະຫວ່າງສອງ. ສະພາແຫ່ງຊາດ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ສະເໜີທິດທາງໃນຕໍ່ໜ້າດັ່ງນີ້:

1) ສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຈິດໃຈຂອງບົດບັນທຶກວ່າດ້ວຍການຮ່ວມມື (MOU) ລະຫວ່າງສອງສະພາແຫ່ງຊາດລາວ-ຫວຽດນາມ, ລະຫວ່າງສອງຄະນະເລຂາທິການສະພາແຫ່ງຊາດ ແລະ ລະຫວ່າງກຳມາທິການທີ່ກ່ຽວຂ້ອງ ໃຫ້ເປັນຮູບປະທຳ;

2) ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງ ລະຫວ່າງສອງລັດຖະບານ ກໍຄືຜົນຂອງກອງປະຊຸມຂອງການນຳຂັ້ນສູງຂອງສອງພັກ, ສອງລັດ ແລະ ບັນດາໂຄງການຮ່ວມມືຂອງສອງປະເທດ;

3) ສືບຕໍ່ຊຸກຍູ້ການພົວພັນຮ່ວມມືທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ລະຫວ່າງສອງປະເທດໃຫ້ຂະຫຍາຍຕົວສູງຂຶ້ນ ສົມຄູ່ກັບການພົວພັນຮ່ວມມືດ້ານການເມືອງ;

4) ສືບຕໍ່ຮ່ວມມືກັນໃນການສ້າງປຶ້ມ 50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ສະພາແຫ່ງຊາດແຫ່ງສສ.ຫວຽດນາມ, ການຮ່ວມມືຮອບດ້ານ ແລະ ພັດທະນາ ເພື່ອເປັນມໍລະດົກໃຫ້ຄົນຮຸ່ນໜຸ່ມໄດ້ສຶກສາ, ສືບທອດ ແລະປົກປັກຮັກສາສາຍພົວພັນແບບພິເສດລາວ-ຫວຽດນາມ ມີໜຶ່ງດຽວໃນໂລກໃຫ້ໝັ້ນຄົງຕະຫຼອດໄປ;

5) ສືບຕໍ່ໃຫ້ບົດຮຽນດ້ານການສ້າງນິຕິກຳຕ່າງໆທີ່ຕິດພັນກັບການສ້າງ ແລະ ປັບປຸງກົດໝາຍ ແກ່ສະມາຊິກສະພາແຫ່ງຊາດ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອສ້າງລັດໃຫ້ຄຸ້ມຄອງດ້ວຍກົດໝາຍ, ພ້ອມນີ້ ກໍສະເໜີສືບຕໍ່ເຝິກອົບຮົມພາສາຫວຽດນາມ ໃຫ້ແກ່ພະນັກງານຂອງສະພາແຫ່ງຊາດລາວໃນຊຸດຕໍ່ໄປ;

6) ສືບຕໍ່ສະໜັບສະໜູນ ແລະຮ່ວມມືກັນໃນການເຄື່ອນໄຫວໃນອົງການລັດຖະສະພາພາກພື້ນ ແລະ ສາກົນ; ໃນທ້າຍເດືອນຕຸລາ 2024 ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ໄອປາ(AIPA) ຄັ້ງທີ 45, ຫວັງຢ່າງຍິ່ງວ່າ ສະພາແຫ່ງຊາດຫວຽດນາມຈະສືບຕໍ່ໃຫ້ການຮ່ວມມື, ສະໜັບສະໜູນ ແລະ ຊ່ວຍເຫຼືອ ໃນການປະຕິບັດພັນທະສາກົນໃຫ້ມີຜົນສຳເລັດ.

ສະຫາຍ ຫງວຽນ ຄັກ ດິ້ງ ໄດ້ຕີລາຄາສູງ ແລະຊົມເຊີຍຢ່າງສຸດໃຈຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງຮອບ ດ້ານທີ່ປະຊາຊົນລາວອ້າຍນ້ອງຍາດມາໄດ້ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວ ໃນພາລະກິດສ້າງສາ

ອ່ານຕໍ່ໜ້າ 11

# ສຳມະນາວິທະຍາສາດການປັບປຸງ ລັດຖະທຳມະນູນ ແລະ ບົດຮຽນຄົ້ນຄວ້ານິຕິບັນຍັດ




(ສພຊ) - ວັນທີ 04 ກໍລະກົດຜ່ານມາ ທີ່ຫໍສະພາແຫ່ງຊາດ ໄດ້ມີພິທີຕ້ອນຮັບສະຫາຍ ຫງວຽນ ຄັກ ດິ້ງ (Nguyễn Khắc Định) ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ສປປລາວ ລະຫວ່າງວັນທີ 03-05 ກໍລະກົດ 2024 ໂດຍການຕ້ອນຮັບຂອງສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ. ການເດີນທາງມາ ສປປ ລາວ ຄັ້ງນີ້ ກໍເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມ, ເວົ້າສະເພາະລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ; ເພື່ອຊຸກຍູ້ສິ່ງເສີມການພົວພັນຮ່ວມມືຂອງສອງປະເທດໃນຂົງເຂດບົດຮຽນກ່ຽວກັບການສ້າງ ແລະ ປັບປຸງກົດໝາຍ ກໍຄືວຽກງານຄົ້ນຄວ້ານິຕິບັນຍັດພ້ອມທັງຮ່ວມກັນຈັດກອງປະຊຸມແລກປ່ຽນບົດຮຽນລະຫວ່າງສອງກຳມາທິການກົດໝາຍຂອງສອງສະພາແຫ່ງຊາດລາວ-ຫວຽດນາມ.

ຈາກນັ້ນ, ສະຫາຍ ຫງວຽນ ຄັກ ດິ້ງ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາວິທະຍາສາດກ່ຽວກັບການປັບປຸງລັດຖະທຳມະນູນ ແລະ ບົດຮຽນການຄົ້ນຄວ້ານິຕິບັນຍັດລະຫວ່າງສະພາແຫ່ງຊາດ ແຫ່ງ ສປປ ລາວ ແລະ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໂດຍການເປັນປະທານຮ່ວມກັບສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ; ເຂົ້າຮ່ວມມີສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ບັນດາຄະນະປະຈຳສະພາແຫ່ງຊາດ, ບັນດາການນຳຂັ້ນສູງຂອງກະຊວງ ແລະ ອົງການຈັດຕັ້ງພັກ-ລັດທີ່ກ່ຽວຂ້ອງ, ບັນດາຮອງປະທານກຳມາທິການສະພາແຫ່ງຊາດ, ບັນດາສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງນະຄອນຫຼວງວຽງຈັນ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງແລະແຂກຖືກເຊີນ.

ກອງປະຊຸມສຳມະນາວິທະຍາສາດຮ່ວມກັນໃນຫົວຂໍ້ "ການປັບປຸງລັດຖະທຳມະນູນ" ຂອງທັງສອງປະເທດ ໄດ້ຮັບຟັງການສະເໜີບົດແລະແລກປ່ຽນຄຳເຫັນຕໍ່ເນື້ອໃນສຳຄັນຄື: 1. ແນວຄິດຂອງພັກກອມມູນິດຫວຽດນາມ ໃນຂະບວນການສ້າງ ແລະປະກາດໃຊ້ລັດຖະທຳມະນູນ ສະເໜີໂດຍສະຫາຍ ຫງວຽນ ຄັກ ດິ້ງ; 2. ການຫັນແນວຄິດຂອງພັກກອມມູນິດຫວຽດນາມ ເປັນບົດບັນຍັດກ່ຽວກັບບົດບາດການນຳພາຂອງພັກ ແລະ ບັນດາອົງການສິດອຳນາດແຫ່ງລັດ ໃນລັດຖະທຳມະນູນ ສະເໜີໂດຍສະຫາຍ ຮວ່າງ ແທ່ງ ຕຸ່ງ (HoàngThanh Tùng) ກຳມະການສູນກາງພັກກອມມູນິດຫວຽດນາມ, ປະທານກຳມາທິການກົດໝາຍ; 3. ການຫັນແນວຄິດຊີ້ນຳຂອງພັກກອມມູນິດຫວຽດນາມ ເປັນບົດບັນຍັດກ່ຽວກັບການປົກຄອງທ້ອງຖິ່ນ ໃນການສ້າງ ແລະ ປະກາດໃຊ້ລັດຖະທຳມະນູນປີ 2013 ສະເໜີໂດຍສະຫາຍນາງຫງວຽນ ເຝືອງ ຖູ້ຍ (Nguyễn Phương Thủy) ຮອງປະທານກຳມາທິການກົດໝາຍ; 4. ບົດຮຽນກ່ຽວກັບການປັບປຸງລັດຖະທຳມະນູນ ຂອງ ສປປ ລາວ ສະເໜີໂດຍສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ.

ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນວ່າ: ກອງປະຊຸມຄັ້ງນີ້ ມີຄວາມໝາຍຄວາມສຳຄັນທີ່ສຸດ ໃຫ້ແກ່ສະພາແຫ່ງຊາດ ກໍຄືຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນປີ 2015 ຂອງ ສປປລາວເຊິ່ງເປັນບົດຮຽນແລະປະສົບການທີ່ລ້ຳຄ່າຈາກ ສສ. ຫວຽດນາມ ເພື່ອເຮັດໃຫ້ການປັບປຸງລັດຖະທຳມະນູນຂອງ ສປປ ລາວ ເປັນລະບົບຄົບຊຸດກວ່າເກົ່າ.

ໃນຕອນເຊົ້າຂອງວັນຕໍ່ມາ ກໍໄດ້ມີກອງປະຊຸມສຳມະນາວິທະຍາສາດກ່ຽວກັບບົດຮຽນການຄົ້ນຄວ້ານິຕິບັນຍັດ ລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມ ໂດຍການເປັນປະທານຮ່ວມຂອງສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ແລະ ສະຫາຍ ຫງວຽນ ຄັກ ດິ້ງ; ເຂົ້າຮ່ວມມີບັນດາປະທານ-ຮອງປະທານກຳມາທິການ, ຫົວໜ້າ-ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ຄະນະກົມ, ຄະນະພະແນກ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງສອງສະພາແຫ່ງຊາດ.

ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ຕີລາຄາສູງຕໍ່ບັນດາບົດຮຽນທີ່ສະຖາບັນຄົ້ນຄວ້ານິຕິບັນຍັດຂອງສະພາແຫ່ງຊາດຫວຽດນາມ ໄດ້ນຳມາສະເໜີໃນຄັ້ງນີ້ ແລະ ມີຄວາມເຊື່ອໝັ້ນວ່າຈະເປັນບົດຮຽນທີ່ມີຄວາມໝາຍສຳຄັນທີ່ສຸດໃຫ້ແກ່ສະພາແຫ່ງຊາດລາວ ໃນການປັບປຸງຍົກລະດັບການຄົ້ນຄວ້າວິທະຍາສາດດ້ານນິຕິບັນຍັດສູ່ບາດກ້າວໃໝ່.

ກອງປະຊຸມໄດ້ຮັບຟັງບົດຮຽນຄົ້ນຄວ້າດ້ານນິຕິບັນຍັດຂອງ ສສ.ຫວຽດນາມ ແລະ ຂອງ ສປປ ລາວ ຈາກສະຫາຍ ຫງວຽນ ວັນ ຫ້ຽນ (Nguyễn Văn Hiển) ຫົວໜ້າສະຖາບັນຄົ້ນຄວ້ານິຕິບັນຍັດສະພາແຫ່ງຊາດຫວຽດນາມ ແລະ ສະຫາຍ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດລາວ ຕາມລຳດັບ.

**(ຂ່າວ: ກົງທະນູຄຳ ພິພັດເສລີ, ພາບ: ສອນສັກ ວັນວິໄຊ)**

# ຮຽບຮຽງເນື້ອໃນກົດໝາຍອາກອນມູນຄ່າເພີ່ມ ແລະ ກົດໝາຍການສົ່ງເສີມການລົງທຶນ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ(ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ(ສະບັບປັບປຸງ) ໄດ້ຈັດຂຶ້ນໃນວັນທີ 03 ແລະ 04 ກໍລະກົດ 2024 ທີ່ຫ້ອງປະຊຸມກົມສ່ວຍສາອາກອນ, ກະຊວງການເງິນ ແລະ ທີ່ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ຕາມລຳດັບ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ, ບັນດາທ່ານຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ (ສພຊ),ບັນດາທ່ານຮອງລັດຖະມົນຕີກະຊວງທີ່ກ່ຽວຂ້ອງ,ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ,ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາທ່ານປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7, 11, 12, 14, 15 ແລະ ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມມີຈຸດປະສົງເພື່ອຮັບປະກັນໃຫ້ບັນດາຄຳຄິດຄຳເຫັນຂອງບັນດາທ່ານ ສສຊ ທີ່ໄດ້ປະກອບຄຳເຫັນໃສ່ 2 ຮ່າງກົດໝາຍດັ່ງກ່າວ ທີ່ຜ່ານການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສພຊຊຸດທີIX ໄດ້ຮັບການຄົ້ນຄວ້າເລືອກເຟັ້ນປັບປຸງໃສ່2ຮ່າງກົດໝາຍ ໃຫ້ມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນແລະກົດໝາຍອື່ນ, ສົນທິສັນຍາສາກົນ ທີ່ສປປລາວເປັນພາຄີ, ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະສາມາດຈັດຕັ້ງປະຕິບັດໄດ້ຢ່າງຍາວນານ; ທັງເປັນການລະດົມສະຕິປັນຍາຈາກທຸກພາກສ່ວນທີ່ກ່ຽວຂ້ອງກັບ2ຮ່າງກົດໝາຍດັ່ງກ່າວ ເພື່ອປັບປຸງຢ່າງຮອບດ້ານ ຈາກນັ້ນ ນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາກ່ອນນຳສະເໜີປະທານສະພາແຫ່ງຊາດພິຈາລະນາລົງລາຍເຊັນ ເພື່ອສະເໜີຕໍ່ປະທານປະເທດພິຈາລະນາອອກລັດຖະດຳລັດປະກາດໃຊ້.

ບັນດາທ່ານທີ່ເຂົ້າຮ່ວມ ໄດ້ພ້ອມກັນຄົ້ນຄວ້າແລະຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ຕາມການປະກອບຄຳເຫັນຂອງສສຊ ໃນຄັ້ງວັນທີ 25 ມິຖຸນາ 2024 ຈຳນວນ 20 ທ່ານ ກວມເອົາ 14 ມາດຕາ ເຊິ່ງຄະນະຮັບຜິດຊອບປັບປຸງກົດໝາຍ ໄດ້ຄົ້ນຄວ້າພິຈາລະນາປັບປຸງສຳເລັດໂດຍພື້ນຖານແລ້ວ ໃນນີ້ສາມາດປັບປຸງ 5 ມາດຕາ ແລະ ສະເໜີຮັກສາໄວ້ຄືເກົ່າ 9 ມາດຕາ ແລະ ໃນວັນທີ 28 ມິຖຸນາ 2024 ເປັນວັນພິຈາລະນາຮັບຮອງເອົາ, ມີ ສສຊ 6 ທ່ານ ໄດ້ປະກອບຄຳເຫັນຕື່ມ ກ່ອນລົງຄະແນນສຽງພິຈາລະນາຮັບຮອງເອົາດ້ວຍຄະແນນເຫັນດີ 131 ທ່ານ ເທົ່າກັບ 92.25%, ບໍ່ເຫັນດີ 10 ທ່ານ ເທົ່າກັບ 7.04%, ບໍ່ອອກສຽງ 1 ທ່ານ ເທົ່າກັບ 0.7% ຖືວ່າກົດໝາຍສະບັບນີ້ຜ່ານການຮັບຮອງຈາກສະພາແຫ່ງຊາດ. ສຳລັບຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສສຊປະກອບຄຳເຫັນໃນຄັ້ງວັນທີ 26 ມິຖຸນາ 2024 ຈຳນວນ 32 ທ່ານ ກວມເອົາ 40 ມາດຕາ ເຊິ່ງຄະນະຮັບຜິດຊອບປັບປຸງກົດໝາຍດັ່ງກ່າວ ກໍໄດ້ຄົ້ນຄວ້າພິຈາລະນາປັບປຸງສຳເລັດໂດຍພື້ນຖານແລ້ວ ໃນນີ້ສາມາດປັບປຸງ 22 ມາດຕາ ແລະ ຮັກສາໄວ້ຄືເກົ່າ 18 ມາດຕາ ແລະ ໃນວັນທີ 28 ມິຖຸນາ 2024 ເປັນວັນພິຈາລະນາຮັບຮອງເອົາ ກໍມີ ສສຊ 10 ທ່ານ ໄດ້ປະກອບຄຳເຫັນຕື່ມ ກ່ອນລົງຄະແນນສຽງຮັບຮອງເອົາດ້ວຍຄະແນນເຫັນດີ 142 ທ່ານ ເທົ່າກັບ 84.5%, ບໍ່ເຫັນດີ 19 ທ່ານ ເທົ່າກັບ 13.38%, ບໍ່ອອກສຽງ 3 ທ່ານ ເທົ່າກັບ 2.11% ຖືວ່າກົດໝາຍສະບັບນີ້ ຜ່ານການຮັບຮອງຈາກສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ ແລະ ນາງ ກຸກກິກ ບຸດດາໄຊ)**

# ສຳມະນາການລົງທຶນຂອງຫວຽດນາມ ຢູ່ ສປປລາວ



(ສພຊ)-ເພື່ອແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງເລິກເຊິ່ງ, ຊຸກຍູ້ ແລະ ສົ່ງເສີມການລົງທຶນລະຫວ່າງສອງປະເທດລາວ-ຫວຽດນາມ ໃຫ້ມີບາດກ້າວໃໝ່, ສະດວກວ່ອງໄວ, ສາມາດດຶງດູດການລົງທຶນທີ່ມີຄຸນນະພາບ ຕິດພັນກັບການແຂ່ງຂັນ ແລະ ເຊື່ອມຈອດກັບພາກພື້ນແລະສາກົນໃຫ້ມີບາດກ້າວຂະຫຍາຍຕົວຂຶ້ນຢ່າງບໍ່ຢຸດຢັ້ງ; ຖອດຖອນບົດຮຽນດ້ານດີ ແລະ ທ່າແຮງກ່ຽວກັບການລົງທຶນດຳເນີນທຸລະກິດຂອງພາກທຸລະກິດຫວຽດນາມຢູ່ສປປລາວພ້ອມທັງສະເໜີແຜນການຮ່ວມມືໃນຕໍ່ໜ້າແລະບັນຫາອື່ນໆທີ່ກ່ຽວຂ້ອງ.

ສະພາແຫ່ງຊາດ (ສພຊ) ຮ່ວມກັບສະຖານທູດຫວຽດນາມປະຈຳ ສປປ ລາວ ໄດ້ຈັດກອງປະຊຸມສຳມະນາກ່ຽວກັບການລົງທຶນຂອງ ສສ.ຫວຽດນາມ ຢູ່ ສປປ ລາວ ໃນຕອນເຊົ້າວັນພຸດທີ 10 ກໍລະກົດຜ່ານມາ ໂດຍການເປັນປະທານຮ່ວມຂອງສະຫາຍ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ແລະ ສະຫາຍ ຫງວຽນ ບ໋າ ຮຸ່ງ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ.ຫວຽດນາມ ປະຈຳ ສປປ ລາວ; ມີບັນດາປະທານ, ຮອງປະທານກຳມາທິການ, ຮອງລັດຖະມົນຕີກະຊວງທີ່ກ່ຽວຂ້ອງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7, 11, 12 ແລະ 15 ພ້ອມດ້ວຍຄະນະກົມ, ຄະນະພະແນກ ຈາກ ສພຊ ແລະ ພາກສ່ວນລັດຖະບານທີ່ກ່ຽວຂ້ອງ, ບັນດາຕາງໜ້າຈາກຄະນະກຳມະການຮ່ວມມື ລາວ-ຫວຽດນາມ, ພະນັກງານສະຖານທູດຫວຽດນາມ ປະຈຳ ສປປ ລາວ ແລະ ພາກສ່ວນທຸລະກິດຂອງຫວຽດນາມ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດກ່ຽວກັບສະພາບການເຄື່ອນໄຫວ, ບັນດາຂໍ້ສະດວກແລະຂໍ້ຫຍຸ້ງຍາກໃນການລົງທຶນດຳເນີນທຸລະກິດຂອງພາກທຸລະກິດຫວຽດນາມ ຢູ່ ສປປ ລາວໃນໄລຍະຜ່ານມາແລະສົນທະນາແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນຢ່າງເລິກເຊິ່ງ.

ສະຫາຍ ຫງວຽນ ບ໋າ ຮຸ່ງ ຍັງໄດ້ນຳພາຄະນະບໍລິຫານງານຂອງບໍລິສັດ ກຣີນໄລທ໌ ຫວຽດນາມ (GREENLIGHT VIETNAM) ເຂົ້າຢ້ຽມຂ່ຳນັບສະຫາຍ ສົມມາດ ພົລເສນາ ເພື່ອນຳສະເໜີໂຄງການປູກຕົ້ນໄມ້ເພື່ອນຳມາປຸງແຕ່ງເປັນສິນຄ້າ.

**(ສອນສັກ ວັນວິໄຊ)**

## ສະຫາຍ...

(ຕໍ່ຈາກໜ້າ 1)

ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການມາຢ້ຽມຢາມຂອງສະຫາຍຫງວຽນ ຄັກ ດິ້ງ ພ້ອມດ້ວຍຄະນະ ເຊິ່ງເປັນການເສີມຂະຫຍາຍສາຍພົວພັນການຮ່ວມມືຮອບດ້ານ ທັງເປັນການຮັດແໜ້ນຄວາມສາມັກຄີຮັກແພງໃຫ້ການຊ່ວຍເຫຼືອເຊິ່ງກັນແລະກັນ ລະຫວ່າງສອງພັກ-ສອງລັດ ກໍຄືປະຊາຊົນສອງຊາດລາວ-ຫວຽດນາມອ້າຍນ້ອງທີ່ມີມາແຕ່ດົນນານໃຫ້ນັບມື້ແໜ້ນແຟ້ນຍິ່ງໆຂຶ້ນ. ສະຫາຍປະທານສະພາແຫ່ງຊາດ ຍັງໄດ້ກ່າວສະແດງຄວາມປິຕິຊົມຊື່ນເປັນຢ່າງຍິ່ງທີ່ເຫັນວ່າການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ໄດ້ຮັບການເສີມຂະຫຍາຍທາງກວ້າງ ແລະ ທາງເລິກສະເໜີມາ; ໃນໄລຍະມໍ່ໆມານີ້ສອງສະພາແຫ່ງຊາດລາວ-ຫວຽດນາມ ໄດ້ມີການແລກປ່ຽນການຢ້ຽມຢາມ ຂອງການນຳຂັ້ນສູງຈົນຮອດຂັ້ນວິຊາການ, ຮ່ວມກັນຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນຕ່າງໆ. ພິເສດ, ເພື່ອນຫວຽດນາມ ໄດ້ສົ່ງຊ່ຽວຊານມາໃຫ້ບົດຮຽນແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານສະພາແຫ່ງຊາດລາວ; ມີການພົວພັນຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນຢ່າງໜັກແໜ້ນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ສະແດງຄວາມຂອບໃຈຕໍ່ສະພາແຫ່ງຊາດຫວຽດນາມ ທີ່ໄດ້ໃຫ້ການສະໜັບສະໜູນທາງດ້ານວິຊາການ, ອຸປະກອນຮັບໃຊ້ກອງປະຊຸມຈຳນວນໜຶ່ງ ແລະ ຫວັງຢ່າງຍິ່ງວ່າຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດຫວຽດນາມ ຈະເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ທີ່ສະພາແຫ່ງຊາດລາວເປັນເຈົ້າພາບໃນລະຫວ່າງວັນທີ 17-23 ຕຸລານີ້ ເຊິ່ງເປັນການສະໜັບສະໜູນ ແລະ ໃຫ້ກຳລັງໃຈແກ່ສະພາແຫ່ງຊາດລາວເພື່ອເຮັດສຳເລັດພັນທະສາກົນຂອງຕົນ.

ສະຫາຍ ຫງວຽນ ຄັກ ດິ້ງ ໄດ້ສະແດງຄວາມຂອບໃຈຕໍ່ສະຫາຍປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍງານໃຫ້ຊາບຈຸດປະສົງຂອງການມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ແລະ ຜົນສຳເລັດກອງປະຊຸມສຳມະນາວິທະຍາສາດກ່ຽວກັບການປັບປຸງລັດຖະທຳມະນູນແລະບົດຮຽນການຄົ້ນຄວ້ານິຕິບັນຍັດ ລະຫວ່າງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມແລະສະພາແຫ່ງຊາດແຫ່ງ ສປປລາວໃນຕອນເຊົ້າມື້ນີ້ຕື່ມອີກ.

**(ຂ່າວ: ກົງທະນູຄຳ ພິພັດເສລີ, ພາບ: ສອນສັກ ວັນວິໄຊ)**

# ເຜີຍແຜ່ກົດໝາຍການແກ້ໄຂຄຳຮ້ອງທຸກ




(ສພຊ) - ວັນທີ 10 ກໍລະກົດ 2024 ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກສະບັບປັບປຸງປີ 2022 ຢູ່ເມືອງພຽງ ແຂວງໄຊຍະບູລີ; ເຂົ້າຮ່ວມມີບັນດາຄະນະປະຈຳ ແລະ ຄະນະພັກເມືອງ, ພະນັກງານຫຼັກແຫ່ງ, ອົງການປົກຄອງບ້ານຂອບເຂດເທດສະບານເມືອງ.

ຈຸດປະສົງແມ່ນເພື່ອຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ຂອງບັນດາພະແນກການ ແລະ ຂະແໜງການຕ່າງໆທີ່ຢູ່ຂັ້ນເມືອງ ແລະ ບ້ານ ໂດຍສະເພາະແມ່ນພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານການແກ້ໄຂຄຳຮ້ອງທຸກ ລວມໄປເຖິງພໍ່ແມ່ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ ໄດ້ຮັບຮູ້ ແລະ ເຂົ້າໃຈເນື້ອໃນຂອງກົດໝາຍດັ່ງກ່າວ ໃຫ້ມີຄວາມເປັນເອກະພາບກັນໃນການນຳໃຊ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ເພາະເນື້ອໃນກົດໝາຍສະບັບນີ້ແມ່ນຕິດພັນກັບການປະຕິບັດພາລະບົດບາດ, ສິດແລະໜ້າທີ່ຂອງທຸກອົງການຈັດຕັ້ງຂອງລັດ, ພາກສ່ວນທຸລະກິດລວມໄປເຖິງປະຊາຊົນລາວບັນດາເຜົ່າ.

ໃນໂອກາດດຽວກັນນີ້, ກຳມາທິການຍຸຕິທຳ ຍັງໄດ້ມອບປຶ້ມກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ແຜ່ນພັບ ແລະ ໂປສເຕີ ກ່ຽວກັບການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຈຳນວນໜຶ່ງ ໃຫ້ແກ່ສະພາປະຊາຊົນແຂວງ, ເມືອງ ແລະ ບ້ານ ເພື່ອເອົາໄປນຳໃຊ້ເປັນບ່ອນອີງໃນການປະຕິບັດວຽກງານແລະເຜີຍແຜ່ຕໍ່ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້.

**(ນາງ ກຸກກິກ ບຸດດາໄຊ)**

# ຮຽບຮຽງເນື້ອໃນຮ່າງກົດໝາຍ ການປົກປັກຮັກສາສິ່ງແວດລ້ອມ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 10-11 ກໍລະກົດ 2024 ທີ່ທ່າລາດ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການສະພາແຫ່ງຊາດ, ທ່ານຮອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ທ່ານຮອງລັດຖະມົນຕີກະຊວງຍຸຕິທຳ, ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທ່ານນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນກ່າວເປີດວ່າ:ກອງປະຊຸມຄັ້ງນີ້ຈະໄດ້ພ້ອມກັນຄົ້ນຄວ້າ ແລະ ຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ(ສະບັບປັບປຸງ)ຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) 14 ທ່ານ ໃນຄັ້ງວັນທີ 18 ມິຖຸນາ 2024 ກວມເອົາ 45 ມາດຕາ ເຊິ່ງຄະນະຮັບຜິດຊອບປັບປຸງກົດໝາຍດັ່ງກ່າວກໍໄດ້ຄົ້ນຄວ້າພິຈາລະນາປັບປຸງສຳເລັດໂດຍພື້ນຖານແລ້ວ ໃນນີ້ສາມາດປັບປຸງ 21 ມາດຕາ ແລະ ສະເໜີຮັກສາໄວ້ຄືເກົ່າ 24 ມາດຕາ ແລະ ໃນວັນທີ 28 ມິຖຸນາ 2024 ກໍໄດ້ພິຈາລະນາຮັບຮອງເອົາກົດໝາຍດ້ວຍຄະແນນສຽງເຫັນດີ 139 ທ່ານ ເທົ່າກັບ 98.58%, ບໍ່ເຫັນດີ 1 ທ່ານ ເທົ່າກັບ 0.7%, ບໍ່ອອກ ສຽງ 1 ທ່ານ ເທົ່າກັບ 0.7% ຖືວ່າກົດໝາຍສະບັບນີ້ຜ່ານການຮັບຮອງຈາກ ສສຊ ແລະ ເປັນກົດໝາຍທີ່ໄດ້ຄະແນນສູງກວ່າໝູ່.

ກອງປະຊຸມໄດ້ຮັບຟັງການສະເໜີ ແລະ ຄົ້ນຄວ້າຄຳເຫັນຂອງ ສສຊ ຕໍ່ກົດໝາຍສະບັບດັ່ງກ່າວ ຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ເນື້ອໃນກົດໝາຍສະບັບນີ້ ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ; ຮັບປະກັນໃຫ້ບັນດາຄຳຄິດຄຳເຫັນຂອງ ສສຊ ທີ່ໄດ້ປະກອບໃສ່ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ທີ່ຜ່ານການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ໄດ້ຮັບການຄົ້ນຄວ້າເລືອກເຟັ້ນປັບປຸງໃສ່ຮ່າງກົດໝາຍດັ່ງກ່າວໃຫ້ມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມແລະສາມາດຈັດຕັ້ງປະຕິບັດໄດ້ຢ່າງຍາວນານ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

# ກອງປະຊຸມໃຫຍ່ຄັ້ງທີ II ສະຫະພັນແມ່ຍິງຮາກຖານ ກສຕສ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ໄດ້ຈັດຂຶ້ນໃນຕອນເຊົ້າວັນສຸກທີ 05 ກໍລະກົດຜ່ານມາ ທີ່ຫ້ອງຖະແຫຼງຂ່າວສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງສະຫາຍ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ຄະນະພັກສະພາແຫ່ງຊາດ, ເລຂາໜ່ວຍພັກຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະຫາຍ ນາງ ມະນີວັນ ເຍຍປາວເຣີ ກຳມະການຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ສະຫາຍ ນາງ ແສງມະນີ ຢາທໍ່ຕູ້ ຫົວໜ້າໜ່ວຍສະຫະພັນແມ່ຍິງຮາກຖານ ກສຕສ; ມີບັນດາຜູ້ຕາງໜ້າໜ່ວຍແມ່ຍິງຕ່າງໆ ແລະ ອົງການຈັດຕັ້ງມະຫາຊົນພາຍໃນສພຊເຂົ້າຮ່ວມທັງໝົດ 32 ສະຫາຍ.

ກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງ, ທິດທາງຄາດໝາຍສູ້ຊົນແຕ່ລະດ້ານ ແລະ ບົດສຳຫຼວດການນຳພາລວມຂອງຄະນະສະຫະພັນແມ່ຍິງຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມຊຸດເກົ່າ ໃນນັ້ນ, ໄດ້ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ, ບາງບົດຮຽນທີ່ຖອດຖອນໄດ້ ໃນການຊີ້ນຳ-ນຳພາ ແລະ ການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ (2018-2024) ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງຄະນະສະຫະພັນແມ່ຍິງຮາກຖານຊຸດໃໝ່ ດີຂຶ້ນກວ່າເກົ່າ; ພ້ອມນີ້, ຍັງໄດ້ເປັນເອກະສັນຮັບຮອງເອົາທິດທາງແຜນການນັບແຕ່ປີ 2024-2030 ແລະ ມາດຕະການໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ. ນອກນັ້ນ, ກໍເຫັນດີຮັບຮອງຄາດໝາຍສູ້ຊົນຂອງການພັດທະນາແມ່ຍິງໂດຍເຊື່ອມຊຶມແນວທາງນະໂຍບາຍພັກ-ລັດ ໃຫ້ໄດ້ 80% ຂຶ້ນໄປ; ປະຕິບັດຂໍ້ແຂ່ງຂັນ 3 ດີ, ຂະບວນແຂ່ງຂັນຍ້ອງຍໍຕ່າງໆ ແລະ ການປະເມີນລັດຖະກອນໃຫ້ໄດ້ 90% ຂຶ້ນໄປ; ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ບັນຈຸສັບຊ້ອນຢູ່ໃນຕຳແໜ່ງຂັ້ນນຳພາ-ຄຸ້ມຄອງໃຫ້ໄດ້ 10%.

ຜູ້ແທນກອງປະຊຸມໄດ້ພ້ອມກັນໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະສະຫະພັນແມ່ຍິງຮາກຖານຊຸດໃໝ່ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະ ຖືກຕ້ອງສອດຄ່ອງກັບມາດຕະຖານແລະເງື່ອນໄຂ ທີ່ກຳນົດໄວ້ ເຊິ່ງມີຜູ້ສະໝັກເລືອກຕັ້ງ 7 ສະຫາຍ, ເລືອກເອົາ 5 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະສະຫະພັນແມ່ຍິງຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຊຸດທີ II ໄດ້ເປັນເອກະພາບເລືອກເອົາສະຫາຍ ນາງ ແສງມະນີ ຢາທໍ່ຕູ້ ເປັນປະທານ, ສະຫາຍ ນາງ ສຸປານີ ແກ້ວມີໄຊ ເປັນຮອງປະທານ, ສະຫາຍ ນາງ ນຸດລາວັນ ບົວດອກທອງ ເປັນຄະນະ ທັງເປັນປະທານກວດກາ, ສະຫາຍ ນາງ ສຸນິຕາ ສີລະຈິດ ເປັນຄະນະທັງເປັນຮອງປະທານກວດກາ, ສະຫາຍ ນາງ ດາລານີ ອິນທາທິລາດ ເປັນຄະນະ.

ສະຫາຍ ນາງ ປິ່ງຄຳ ລາຊະສິມມາ ໄດ້ໂອ້ລົມຕໍ່ທີ່ປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານການເຄື່ອນໄຫວ ແລະ ການສ້າງຂະບວນການຕ່າງໆທີ່ບັນດາສະຫາຍສະມາຊິກສະຫະພັນແມ່ຍິງໄດ້ຕັ້ງໜ້າປະກອບສ່ວນຈັດຕັ້ງປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາ, ພ້ອມກັນນີ້ສະຫາຍຍັງໄດ້ເນັ້ນໜັກ ແລະ ໃຫ້ທິດຊີ້ນຳຕໍ່ສະມາຊິກສະຫະພັນແມ່ຍິງຕ້ອງໄດ້ເອົາໃຈໃສ່ບຸກບືນ ແລະ ຈັດຕັ້ງປະຕິບັດໜ້າທີ່ການເມືອງເພີ່ມຕື່ມບາງບັນຫາຄື: ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີ, ເຂົ້າຮ່ວມຂະບວນການຂອງອົງການຈັດຕັ້ງຢ່າງເປັນເຈົ້າການ, ສືບຕໍ່ປັບປຸງຊີວິດການເປັນຢູ່ຂອງສະມາຊິກແມ່ຍິງ ໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ, ແບບແຜນການນຳພາ, ແບບແຜນວິທີເຮັດວຽກຢ່າງມີວິທະຍາສາດ ແລະ ມີຫົວຄິດປະດິດສ້າງ ບົນພື້ນຖານລະບຽບຫຼັກການ; ດຳເນີນຊີວິດການເມືອງເປັນປະຈຳທຸກເດືອນ ໂດຍຖືເອົາການຕຳນິຕິຊົມຕົນເອງ, ການຕິຊົມເຊິ່ງກັນແລະກັນ ເປັນປັດໄຈສຳຄັນ, ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ; ຕັ້ງໜ້າເຄື່ອນໄຫວປະຕິບັດຂໍ້ແຂ່ງຂັນ 3 ດີຂອງແມ່ຍິງລາວ ໂດຍຕິດພັນກັບຂໍ້ແຂ່ງຂັນ“ຮັກຊາດ ແລະ ພັດທະນາ” ເຊິ່ງເປັນພື້ນຖານປັດໄຈສຳຄັນເພື່ອເຮັດໃຫ້ໜ່ວຍສະຫະພັນແມ່ຍິງຮາກຖານ ສາມາດຍາດໄດ້ຜົນງານທີ່ດີເດັ່ນຂຶ້ນກວ່າເກົ່າ; ພ້ອມນັ້ນ, ກໍຕ້ອງເອົາໃຈໃສ່ຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີຂອງແມ່ຍິງ ໃຫ້ເປັນຂະບວນຟົດຟື້ນ, ຊີ້ນຳ-ນຳພາສະມາຊິກແມ່ຍິງເຮັດລ້ອນໜ້າທີ່ເປັນເສນາທິການໃຫ້ການນຳ ກໍຄືກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໃນຕໍ່ໜ້າ ໃຫ້ມີໝາກຜົນອັນຈົບງາມ.

ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ ຮຽກຮ້ອງບັນດາສະຫາຍສະມາຊິກ ຈົ່ງເຊີດຊູນ້ຳໃຈສາມັກຄີເປັນປຶກແຜ່ນ, ຍົກສູງຄວາມເປັນເຈົ້າຕົນເອງ, ເພີ່ມທະວີຄວາມຮັບຜິດຊອບ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງຕົນ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ໃນຄັ້ງນີ້ ໝູນໃຊ້ເຂົ້າໃນການພັດທະນາວຽກງານແມ່ຍິງ ໃຫ້ປາກົດຜົນເປັນຈິງ ແລະ ມີຜົນສຳເລັດຢ່າງຈົບງາມ.

ກ່ອນໜ້ານັ້ນ ຄືວັນທີ 03 ກໍລະກົດ, ເອື້ອຍນ້ອງແມ່ຍິງຮາກຖານ ກສຕສ ໄດ້ສ້າງຂະບວນການກະກຽມໃຫ້ແກ່ກອງປະຊຸມໃຫຍ່ຄັ້ງທີ II ຕິດພັນກັບການຈັດຕັ້ງປະຕິບັດຄຳຂວັນຂໍ້

ອ່ານຕໍ່ໜ້າ 6

# ຄລສ ມອບໃບຍ້ອງຍໍໃຫ້ແກ່ ບໍລິສັດ ສົມຈິດຈະເລີນ ຈຳກັດຜູ້ດຽວ




(ສພຊ) - ວັນຈັນທີ 01 ກໍລະກົດຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ (ຄລສ) ໃຫ້ແກ່ບໍລິສັດ ສົມຈິດຈະເລີນ ຈຳກັດຜູ້ດຽວ ເພື່ອເປັນການສົນລະເສີນຄຸນງາມຄວາມດີ ແລະ ຈາລຶກບຸນຄຸນ ທີ່ໃຫ້ການຊ່ວຍເຫຼືອແກ່ ສພຊ ຕະຫຼອດມາ, ຕາງໜ້າມອບໂດຍທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ, ຕາງໜ້າຮັບໂດຍທ່ານສົມຈິດອິນທະວົງປະທານບໍລິສັດດັ່ງກ່າວເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ບໍລິສັດ ສົມຈິດຈະເລີນ ຈຳກັດຜູ້ດຽວ ໄດ້ປະກອບສ່ວນຊ່ວຍເຫຼືອວຽກງານສາຍດ່ວນ 156 ໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ລວມມູນຄ່າຫຼາຍກວ່າ 20 ລ້ານກີບ ເຊິ່ງເຄື່ອງທີ່ນຳມາປະກອບສ່ວນຄັ້ງນີ້ມີ ເສື້ອໂປໂລ ແລະ ຄອມພິວເຕີພ້ອມເຄື່ອງພິມ ຈຳນວນ 1 ຊຸດ.

**(ນາງ ອາລິນ ສຸພົມມະປະດິດ)**

# ປະທານກຳມາທິການການຕ່າງປະເທດ ຕ້ອນຮັບຄະນະຜູ້ແທນອົງການຈັດຕັ້ງສາກົນ



(ສພຊ)-ເພື່ອເປັນການປະກອບສ່ວນສະໜັບສະໜູນຮອບດ້ານໃຫ້ແກ່ສະພາແຫ່ງຊາດລາວ ແລະ ເປັນການປຶກສາຫາລືແລກປ່ຽນຄຳຄິດເຫັນທາງດ້ານເນື້ອໃນ ແລະ ວິຊາການ ເພື່ອກະກຽມຄວາມພ້ອມໃນການເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ45ແລະກອງປະຊຸມອື່ນໆທີ່ສະພາແຫ່ງຊາດລາວ ຈະເປັນເຈົ້າພາບໃນປີນີ້; ໃນຕອນເຊົ້າວັນທີ 11 ກໍລະກົດ 2024 ທີ່ຫ້ອງຮັບແຂກຄະນະເລຂາທິການສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ຫົວໜ້າອະນຸກຳມະການກອງເລຂາແຫ່ງຊາດໄອປາ-45 ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານ ແມັດທິວ ເຮັຈສ (Matthew Hedges) ຜູ້ອຳນວຍການລະດັບພາກພື້ນອາຊີ-ປາຊີຟິກ ແລະອາເມຣິກາ, ມູນນິທິ ເວສມິນສເຕີ ເພື່ອປະຊາທິປະໄຕ (Westminster Foundation for Democracy-WFD) ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ.

ທ່ານ ແມັດທິວ ເຮັຈສ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ພ້ອມທັງລາຍງານສະພາບການເຄື່ອນໄຫວທີ່ຕັ້ງໜ້າຂອງ WFD ໃນການປະຕິບັດພາລະບົດບາດຂອງຕົນປະຈຳພາກພື້ນອາຊີ-ປາຊີຟິກ ທັງໃຫ້ການສະໜັບສະໜູນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ຂອງ ສປປ ລາວ ໂດຍສະເພາະການສະໜັບສະໜູນທາງດ້ານງົບປະມານ, ສະໜອງຄວາມຮູ້ທາງດ້ານວິຊາການ, ແລກປ່ຽນບົດຮຽນ ແລະ ປະສົບການກັບລັດຖະສະພາອັງກິດ ແລະ ລັດຖະສະພາອື່ນໆໃນພາກພື້ນ.

ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ, ຂອບໃຈ ແລະ ຕີລາຄາສູງ ຕໍ່ການຊ່ວຍເຫຼືອສະໜັບສະໜູນຕະຫຼອດມາຂອງມູນນິທິ ເວສມິນສເຕີ ເພື່ອປະຊາທິປະໄຕ ທີ່ມີຕໍ່ ສພຊ ກໍຄື ສພຂ ພ້ອມທັງສະເໜີໃຫ້ສືບຕໍ່ສະໜັບສະໜູນໃນຕໍ່ໜ້າ ແລະ ຫວັງວ່າ ມູນນິທິ ຈະສືບຕໍ່ຊ່ວຍພັດທະນາຂີດຄວາມສາມາດທາງດ້ານບຸຄະລາກອນ ກໍຄືການຊ່ວຍເຫຼືອສະພາແຫ່ງຊາດລາວ ກະກຽມການເປັນເຈົ້າພາບກອງປະຊຸມໄອປາ ຄັ້ງທີ45 ເພື່ອເຮັດໃຫ້ກອງປະຊຸມຄັ້ງນີ້ ໄດ້ຮັບຜົນສຳເລັດຢ່າງຈົບງາມ.

ໃນວັນດຽວກັນ, ທ່ານ ສັນຍາ ປຣະເສີດ ຍັງໄດ້ຕ້ອນຮັບທ່ານ ນິໂຄລາ ດິ ຈູລີໂອ (Nicola Di Giulio) ສະມາຊິກສະພາແຂວງກົງຕົງໂວ, ປະເທດສະວິດ (ສະຫະພັນສະວິດ) ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ; ທັງນີ້, ເພື່ອເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມເປັນເວລານານມາແລ້ວ ເຊິ່ງເປັນການລິເລີ່ມທີ່ດີໃນການປະກອບສ່ວນອັນສຳຄັນເພື່ອເສີມສ້າງສາຍພົວພັນມິດຕະພາບ ແລະການຮ່ວມມືທີ່ດີ ລະຫວ່າງສອງປະເທດລາວ-ສະວິດ ເວົ້າລວມ, ເວົ້າສະເພາະລະຫວ່າງສອງອົງການນິຕິບັນຍັດ ໃຫ້ສືບຕໍ່ເສີມຂະຫຍາຍໃຫ້ເຂັ້ມແຂງ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ທ່ານ ສັນຍາ ປຣະເວີດ ໄດ້ລາຍງານສະພາບໂດຍລວມຂອງ ສປປ ລາວ ແລະ ສະພາແຫ່ງຊາດ ທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີລະຫວ່າງ ສປປ ລາວ ກັບ ສະຫະພັນສະວິດ ຕະຫຼອດໄລຍະ 60 ກວ່າປີ ແຫ່ງການສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ04ກັນຍາ1963; ປີ 2023 ສອງຝ່າຍໄດ້ສະຫຼອງວັນຄົບ ຮອບ 60 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ແລະ ຍັງສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ມີຜົນສຳເລັດອັນດີ ບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈ, ເຄົາລົບນັບຖື ແລະ ເພື່ອຜົນປະໂຫຍດລວມຂອງປະຊາຊົນສອງຊາດ ເຊິ່ງສະແດງອອກສອງປະເທດໄດ້ແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆແລະມີການພົວພັນຮ່ວມມືນຳກັນມາໂດຍຕະຫຼອດ. ໃນປີ 2024, ສະພາແຫ່ງຊາດລາວຈະເປັນເຈົ້າພາບຈັດກອງປະຊຸມໄອປາ ຄັ້ງທີ 45 ແລະ ຫວັງຢ່າງຍິ່ງວ່າລັດຖະສະພາສະວິດ ຈະໃຫ້ການສະໜັບສະໜູນໃນການປະຕິບັດພັນທະສາກົນຄັ້ງນີ້.

ສ.ສະວິດ ໄດ້ໃຫ້ການຊ່ວຍເຫຼືອ ສປປລາວ ທັງໃນຮູບການຮ່ວມມືສອງຝ່າຍ ແລະຫຼາຍຝ່າຍປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ໂດຍສຸມໃສ່ 3 ຂົງເຂດຄື: 1) ການປົກຄອງ ແລະ ການມີສ່ວນຮ່ວມຂອງພົນລະເມືອງ, 2) ການພັດທະນາເສດຖະກິດໃຫ້ທົ່ວເຖິງໝົດທຸກຄົນ ແລະ 3) ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດໃຫ້ຍືນຍົງ; ພ້ອມນີ້, ສອງຝ່າຍໄດ້ໃຫ້ການສະໜັບສະໜູນເຊິ່ງກັນແລະກັນ ໃນເວທີພາກພື້ນ ແລະ ສາກົນ ເປັນຕົ້ນໃນຂອບອາຊຽນ, ອາເຊັມ, ອົງການສະຫະປະຊາຊາດ ແລະ ອື່ນໆ.

ເພື່ອສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດໃນຕໍ່ໜ້າ, ທ່ານ ສັນຍາ ປຣະເສີດ ໄດ້ສະເໜີໃຫ້ສືບຕໍ່ຊຸກຍູ້ການແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆນຳກັນ ຢ່າງປົກກະຕິ; ລັດຖະສະພາ ກໍຄືລັດຖະບານສະວິດ ສືບຕໍ່ຊ່ວຍເຫຼືອພັດທະນາຊັບພະຍາກອນມະນຸດໃຫ້ແກ່ສະພາແຫ່ງຊາດລາວ ໂດຍສະເພາະແມ່ນວິຊາການ ທີ່ຕິດພັນການປະຕິບັດໜ້າທີ່ຂອງ ສພຊ ແລະ ສພຂ; ຊຸກຍູ້ ແລະ ສິ່ງເສີມລັດຖະບານທັງສອງປະເທດ ສືບຕໍ່ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາແລະໂຄງການຮ່ວມມືສອງຝ່າຍ ທີ່ກຳລັງຈັດຕັ້ງປະຕິບັດຢູ່ ກໍຄືແຜນການຮ່ວມມືທີ່ສອງລັດຖະບານໄດ້ຕົກລົງ ເພື່ອນຳເອົາຜົນປະໂຫຍດອັນແທ້ຈິງມາສູ່ປະຊາຊົນສອງຊາດ ລາວ-ສະວິດ; ສືບຕໍ່ຮ່ວມມືກັນໃນການເຄື່ອນໄຫວຢູ່ເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ອາລິນ ສຸພົມມະປະກິດ)**

# ຮຽບຮຽງເນື້ອໃນຮ່າງກົດໝາຍ ການຕ້ານການສໍ້ລາດບັງຫຼວງ



(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 8-9 ກໍລະກົດ2024 ທີ່ທ່າລາດແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ, ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະການກວດສອບແລະທ່ານ ວິໄລວັນ ບຸດດາຄຳຮອງປະທານອົງການກວດກາແຫ່ງລັດ; ເຂົ້າຮ່ວມມີທ່ານຮອງລັດຖະມົນຕີກະຊວງຍຸຕິທຳ, ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ປອ. ພູທອນ ວໍລະເພັດ ໄດ້ມີຄຳເຫັນກ່າວເປີດວ່າ: ພວກເຮົາຈະໄດ້ພ້ອມກັນຄົ້ນຄວ້າຄືນບັນດາຄຳເຫັນຂອງສະມາຊິກສະພາແຫ່ງຊາດ(ສສຊ) ແລະ ເລືອກເຟັ້ນເອົາຄຳເຫັນທີ່ມີເຫດມີຜົນປັບປຸງໃສ່ກົດໝາຍແນໃສ່ເຮັດໃຫ້ເນື້ອໃນຂອງກົດໝາຍມີຄວາມຄົບຖ້ວນ, ສົມບູນ ແລະ ສາມາດຈັດຕັ້ງປະຕິບັດໄດ້; ເພື່ອຮັບປະກັນໃຫ້ບັນດາຄຳເຫັນທີ່ ສສຊ ປະກອບໃສ່ກົດໝາຍສະບັບນີ້ ໄດ້ຮັບການຄົ້ນຄວ້າພິຈາລະນາຢ່າງຖີ່ຖ້ວນ ແລະເລິກເຊິ່ງນັ້ນ ຈຶ່ງຂໍສະເໜີໃຫ້ບັນດາທ່ານພ້ອມກັນຄົ້ນຄວ້າຕື່ມຕໍ່ບັນດາຄຳເຫັນທີ່ສາມາດປັບປຸງໄດ້ ແລະ ບໍ່ສາມາດປັບປຸງໄດ້ນັ້ນ ຄະນະຮັບຜິດຊອບໄດ້ໃຫ້ເຫດຜົນພຽງພໍແລ້ວບໍ່ ຫຼື ຄວນຕ້ອງໄດ້ປັບປຸງຄືແນວໃດ ເພື່ອເຮັດໃຫ້ກົດໝາຍສະບັບນີ້ປະກາດໃຊ້ແລ້ວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

ກອງປະຊຸມໄດ້ຮັບຟັງການສະເໜີ ແລະ ຄົ້ນຄວ້າຄຳເຫັນຂອງ ສສຊ ຕາມການປະກອບຄຳເຫັນໃນຕອນເຊົ້າຂອງວັນທີ 18 ມິຖຸນາ 2024 ຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ຈຳນວນ 24 ທ່ານ ແລະ ປະກອບຄຳເຫັນສົ່ງໃຫ້ກອງເລຂາ 8 ທ່ານ, ໃນນີ້ກວມເອົາ 36 ມາດຕາ 77 ເນື້ອໃນ; ຈາກນັ້ນ, ຄະນະຮັບຜິດຊອບປັບປຸງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ກໍໄດ້ຈັດກອງປະຊຸມຄົ້ນຄວ້າພິຈາລະນາບັນດາຄຳເຫັນຂອງ ສສຊ ໃນຄັ້ງວັນທີ 20 ມິຖຸນາ 2024 ສາມາດປັບປຸງ 14 ມາດຕາ ກວມເອົາ 21 ເນື້ອໃນ, ສະເໜີຮັກສາໄວ້ຄືເກົ່າ 22 ມາດຕາ ກວມເອົາ 56 ເນື້ອໃນ ແລະ ໄດ້ລາຍງານຄືນຜົນການປັບປຸງຕໍ່ກອງປະຊຸມພິຈາລະນາຮັບຮອງເອົາໃນຕອນເຊົ້າຂອງວັນທີ 28 ມິຖຸນາ 2024 ດ້ວຍຄະແນນສຽງເຫັນດີ 93.18%.

ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ສຸມສະຕິປັນຍາຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ເນື້ອໃນກົດໝາຍດັ່ງກ່າວເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ; ຮັບປະກັນໃຫ້ບັນດາຄຳຄິດຄຳເຫັນຂອງ ສສຊ ທີ່ໄດ້ປະກອບໃສ່ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ) ທີ່ຜ່ານການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໄດ້ຮັບການຄົ້ນຄວ້າເລືອກເຟັ້ນປັບປຸງໃສ່ຮ່າງກົດໝາຍດັ່ງກ່າວໃຫ້ມີຄວາມຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງຍາວນານ.

ຈຸດປະສົງຂອງກອງປະຊຸມເພື່ອລະດົມສະຕິປັນຍາຈາກທຸກພາກສ່ວນທີ່ກ່ຽວຂ້ອງກັບການຮ່າງກົດໝາຍແຕ່ລະສະບັບເພື່ອປັບປຸງໃສ່ຮ່າງກົດໝາຍຢ່າງຮອບດ້ານ ຈາກນັ້ນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດພິຈາລະນາ ກ່ອນນຳສະເໜີປະທານສະພາແຫ່ງຊາດລົງລາຍເຊັນ ເພື່ອສະເໜີຕໍ່ປະທານປະເທດປະກາດໃຊ້.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍ ເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ກົງທະນູຄຳ ພົພັດເສລີ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 6)

ແຂ່ງຂັນ 3 ດີ, ຂະບວນການຮັກຊາດ ແລະ ພັດທະນາຕາມທິດສາມສ້າງຂອງໜ່ວຍແມ່ຍິງຮາກຖານ ດ້ວຍການເຄື່ອນໄຫວທັດສະນະສຶກສາກິດຈະກຳປູກຜັກຂອງກຸ່ມປູກຜັກຫາດກັນຊາ, ບ້ານຫາດກັນຊາ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ໂດຍການຕ້ອນຮັບຂອງທ່ານ ສີສຸພັນ ທອງທຸມມາ ຫົວໜ້າກຸ່ມປູກຜັກຫາດກັນຊາ ພ້ອມດ້ວຍຄະນະພັກບ້ານ ແລະ ຄະນະກຸ່ມດັ່ງກ່າວ.

ການທັດສະນະສຶກສາຄັ້ງນີ້, ຄະນະໄດ້ຮັບຟັງການລາຍງານສະພາບລວມຂອງກຸ່ມປູກຜັກຫາດກັນຊາ, ຖາມ-ຕອບ ກ່ຽວກັບເຕັກນິກກະສິກຳສະອາດ, ສົນທະນາແລກປ່ຽນຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ບັນຫາທີ່ເກີດຂຶ້ນຢູ່ພາຍໃນກຸ່ມ ພ້ອມທັງລົງເບິ່ງສະຖານທີ່ປູກຜັກຕົວຈິງ ເພື່ອຖອດຖອນບົດຮຽນ, ວິທີການປູກພືດຜັກໃຫ້ກັບເອື້ອຍນ້ອງແມ່ຍິງ ໄດ້ນຳໄປໝູນໃຊ້ເຂົ້າໃນການດຳລົງຊີວິດຕົວຈິງ ໃນການປູກພືດຜັກສວນຄົວໄວ້ບໍລິໂພກ ຫຼື ສ້າງເສດຖະກິດຄອບຄົວ.

**(ນາງ ອາລິນ ສຸພົມມະປະກິດ)**

# ຫາລືແນວຄິດລິເລີ່ມການສ້າງເມືອງອັດສະລິຍະ ແຫ່ງສຸຂະພາບຂອງປະຊາຄົມອາຊຽນ



(ສພຊ) - ຕອນບ່າຍວັນທີ 08 ກໍລະກົດຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ, ຫົວໜ້າຄະນະຮັບຜິດຊອບເນື້ອໃນດ້ານວຽກງານສັງຄົມຂອງອະນຸກຳມະການເນື້ອໃນໄອປາ-45 ພ້ອມດ້ວຍຄະນະ ໄດ້ຕ້ອນຮັບ ແລະ ພົບປະກັບທ່ານ ສຈ. ດຣ. ຢຸນ ຊອນຮົງ (Yun-Chul Hong) ປະທານຄະນະກຳມະການປ້ອງກັນພະຍາດແຫ່ງສ.ເກົາຫຼີ, ປະທານຄະນະບໍລິຫານງານເວທີປາໄສເມືອງສຸຂະພາບໂລກ (World Health Cities Forum - WHCF) ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ລະຫວ່າງວັນທີ 07-08 ກໍລະກົດ 2024.

ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ສະແດງຄວາມຍິນດີຕ້ອນຮັບ ພ້ອມທັງສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຄວາມເອົາໃຈໃສ່ຂອງຄະນະຊ່ຽວຊານສ.ເກົາຫຼີທີ່ໄດ້ສະໜັບສະໜູນ ສປປ ລາວ ໃຫ້ນຳເອົາແນວຄິດລິເລີ່ມກ່ຽວກັບເມືອງອັດສະລິຍະແຫ່ງສຸຂະພາບຂອງປະຊາຄົມອາຊຽນ (ASEAN Smart Health City Initiative) ເຂົ້ານຳສະເໜີໃນກອງປະຊຸມໄອປາ ຄັ້ງທີ 45 ທີ່ ສປປ ລາວ ເປັນເຈົ້າພາບ ເຊິ່ງແນວຄວາມຄິດລິເລີ່ມດັ່ງກ່າວ ຈະມີປະໂຫຍດແກ່ ສປປລາວກໍຄືປະຊາຄົມອາຊຽນໃນອະນາຄົດ ເນື່ອງຈາກວ່າ: (1) ສປປ ລາວ ຈະມີມະຕິເປັນຂອງຕົນເອງ ເພື່ອນຳສະເໜີກອງປະຊຸມສຸດຍອດອາຊຽນແລະກອງປະຊຸມໄອປາ ຮັບຮອງເອົາຢ່າງເປັນທາງການ; (2) ສປປ ລາວ ຈະເປັນຕົວແບບໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວເປັນປະເທດທຳອິດໃນພາກພື້ນອາຊຽນ ແລະ ຖ້າເປັນຜົນສຳເລັດ ກໍຈະເປັນປະໂຫຍດຕໍ່ແນວທາງຮັກສາສຸຂະພາບທີ່ດີຂອງປະຊາຊົນລາວ ກໍຄືປະຊາຊົນອາຊຽນ ພ້ອມທັງຈະເປັນການຍົກສູງບົດບາດຂອງ ສປປ ລາວ ທາງດ້ານຄວາມເປັນຜູ້ນຳດ້ານດັ່ງກ່າວ.

ທັງສອງຝ່າຍໄດ້ປຶກສາຫາລືແລະແລກປ່ຽນຄວາມຄິດເຫັນກ່ຽວກັບແນວຄິດລິເລີ່ມການສ້າງເມືອງອັດສະລິຍະແຫ່ງສຸຂະພາບຂອງປະຊາຄົມອາຊຽນໃນການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຮັກສາ, ຮ່າງມະຕິວ່າດ້ວຍ "ການສົ່ງເສີມບົດບາດຂອງລັດຖະສະພາກ່ຽວກັບນະວັດຕະກຳການຮັກສາສຸຂະພາບແບບອັດສະລິຍະ" ທີ່ຈະນຳເຂົ້າຮັບຮອງໃນກອງປະຊຸມກຳມາທິການສັງຄົມຂອງກອງປະຊຸມໄອປາ ຄັ້ງທີ 45. ສຳລັບທິດທາງການຮ່ວມມືໃນຕໍ່ໜ້າ, ສະເໜີໃຫ້ສືບຕໍ່ສະໜັບສະໜູນ ສປປລາວໃນການເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ແລະ ກອງປະຊຸມໄອປາ ໃນປີ 2024 ໂດຍສະເພາະແມ່ນການສະໜອງຂໍ້ມູນ, ຮ່າງມະຕິ ແລະ ຮ່າງບົດສະເໜີແນວຄິດລິເລີ່ມດັ່ງກ່າວ; ສືບຕໍ່ຊ່ວຍເຫຼືອທາງດ້ານທຶນຮອນ ແລະ ວິຊາການ ເພື່ອພັດທະນາວຽກງານສາທາລະນະສຸກຂອງ ສປປ ລາວ.

**(ອານຸສອນ ພູມມີທອນ**

# ກອງປະຊຸມໃຫຍ່ຄັ້ງທີ II ສະຫະພັນແມ່ຍິງຮາກຖານ ກບຜ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານກຳມາທິການບັນດາເຜົ່າ (ກບຜ) ໄດ້ຈັດຂຶ້ນໃນຕອນເຊົ້າວັນອັງຄານທີ 09 ກໍລະກົດຜ່ານມາ ທີ່ຫ້ອງຖະແຫຼງຂ່າວສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງສະຫາຍ ນາງ ທັດສະດາພອນ ຈັນທະມາດ ຮອງເລຂາ, ປະທານກວດກາໜ່ວຍພັກຮາກຖານກຳມາທິການບັນດາເຜົ່າ, ສະຫາຍ ນາງ ມະນີວັນ ເຍຍປາວເຮີ ກຳມະການຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ສະຫາຍ ນາງ ສີສະໝຸດ ຈັນທະວົງ ຫົວໜ້າໜ່ວຍແມ່ຍິງຮາກຖານກຳມາທິການບັນດາເຜົ່າ; ມີບັນດາສະຫາຍຈາກໜ່ວຍແມ່ຍິງຮາກຖານພາຍໃນ ສພຊ, ຕາງໜ້າໜ່ວຍອົງການຈັດຕັ້ງມະຫາຊົນພາຍໃນ ກບຜ ເຂົ້າຮ່ວມທັງໝົດ 32 ສະຫາຍ, ຍິງ 28 ສະຫາຍ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງ ນັບທັງຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ໃນໄລຍະ 7 ປີຜ່ານມາ (2018-2024) ແລະ ທິດທາງ, ຄາດໝາຍສູ້ຊົນ ແລະ ວຽກງານຈຸດສຸມແຕ່ລະດ້ານ ໃນການຊີ້ນຳ-ນຳພາຂອງສະຫະພັນແມ່ຍິງຮາກຖານ ໄລຍະ 5 ປີຕໍ່ໜ້າ (2024-2028); ຕີລາຄາຕໍ່ບົດສຳຫຼວດການນຳພາລວມຂອງຄະນະໜ່ວຍແມ່ຍິງຮາກຖານ ຊຸດທີ I ໃນການເຄື່ອນໄຫວຊີ້ ນຳ-ນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ I ທີ່ມີຜົນສຳເລັດຫຼາຍດ້ານ.

ຜູ້ແທນກອງປະຊຸມໃຫຍ່ 12 ສະຫາຍ ໄດ້ໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະສະຫະພັນແມ່ຍິງຮາກຖານຊຸດໃໝ່ ທີ່ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ເຊິ່ງມີຜູ້ສະໝັກເລືອກຕັ້ງ 5 ສະຫາຍ, ເລືອກເອົາ 3 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະສະຫະພັນແມ່ຍິງຮາກຖານກຳມາທິການບັນດາເຜົ່າ ຊຸດທີ II ໄດ້ເປັນເອກະພາບເລືອກເອົາສະຫາຍ ນາງ ລາຕີ ບຸດຕະວົງ ເປັນປະທານ, ສະຫາຍ ນາງ ບົວພັນ ພົມມະສານ ເປັນຮອງປະທານ ທັງເປັນປະທານກວດກາ, ສະຫາຍ ນາງ ແສງລະວີ ສົມພາບມີໄຊ ເປັນຄະນະ.

ສະຫາຍ ນາງ ທັດສະດາພອນ ຈັນທະມາດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຮຽກຮ້ອງຄະນະສະຫະພັນແມ່ຍິງຊຸດໃໝ່ ສືບຕໍ່ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນທີ່ໄດ້ກຳນົດໄວ້ໃນກົດໝາຍແລະກົດລະບຽບຂອງສະຫະພັນແມ່ຍິງລາວ; ສ້າງໂອກາດ ແລະ ເງື່ອນໄຂ ໃຫ້ສະມາຊິກແມ່ຍິງໄດ້ພັດທະນາຕົນເອງທາງດ້ານຄວາມຮູ້, ວິຊາສະເພາະແລະພາສາຕ່າງປະເທດ; ນຳພາສະມາຊິກປະຕິບັດມະຕິກອງປະຊຸມໃຫຍ່ຂອງຕົນ ຕິດພັນກັບມະຕິກອງປະຊຸມໃຫຍ່ຂອງສະຫະພັນແມ່ຍິງສະພາແຫ່ງຊາດ ດ້ວຍການຫັນເປັນແຜນງານ, ໂຄງການ, ແຜນກິດຈະກຳການເຄື່ອນໄຫວຕິດພັນກັບໜ້າທີ່ການເມືອງຂອງຕົນ; ສຶກສາອົບຮົມວຽກງານການເມືອງ-ແນວຄິດສະມາຊິກແມ່ຍິງ ຢ່າງເລິກເຊິ່ງ, ຕໍ່ເນື່ອງ ແລະ ດ້ວຍຫຼາຍຮູບຫຼາຍວິທີ ໃຫ້ມີຄຸນສົມບັດສິນທຳປະຕິວັດ, ມີຄວາມອ່ອນນ້ອມຖ່ອມຕົນ, ເຄົາລົບ ແລະ ໃຫ້ກຽດເຊິ່ງກັນແລະກັນ, ຮັກສາກຽດສັກສີ ແລະ ວັດທະນະທຳທີ່ເປັນເອກະລັກຂອງແມ່ຍິງລາວ; ເສີມຂະຫຍາຍທ່າແຮງຄວາມຮູ້ຄວາມສາມາດ, ກ້າຄິດກ້າເຮັດ ກ້າຮັບຜິດຊອບ, ຖືເອົາຜົນສຳເລັດເປັນໄມ້ຫຼາວັດແທກຄຸນສົມບັດ, ຄວາມຮູ້ຄວາມສາມາດໃນການພັດທະນາຕົນເອງ ແລະ ຄອບຄົວ ໃຫ້ນັບມື້ນັບຈະເລີນຮຸ່ງເຮືອງຂຶ້ນໄປເລື້ອຍໆ; ເອົາໃຈໃສ່ປັບປຸງການຈັດຕັ້ງໃຫ້ໜັກແໜ້ນ, ເຂັ້ມແຂງໃນທຸກດ້ານ, ປັບປຸງແບບແຜນການນຳພາ, ແບບແຜນວິທີເຮັດວຽກໃຫ້ມີແຜນການ, ແຜນງານ, ມີການຊຸກຍູ້, ຕິດຕາມກວດກາ, ປະເມີນ, ສະຫຼຸບຖອດຖອນບົດຮຽນໃນແຕ່ລະໄລຍະຢ່າງພາວະວິໄສ; ຕັ້ງໜ້າປະຕິບັດຂໍ້ແຂ່ງຂັນ 3 ດີ ຕິດພັນກັບຂໍ້ແຂ່ງຂັນ ຮັກຊາດ ແລະ ພັດທະນາ; ປະສານສົມທົບກັບຄະນະໜ່ວຍພັກຮາກຖານ ໃນການສ້າງພະນັກງານເພດຍິງໃຫ້ມີຄວາມເຂັ້ມແຂງ, ກ້າວໜ້າໃນທຸກດ້ານ ເພື່ອໃຫ້ສະມາຊິກແມ່ຍິງມີມາດຕະຖານຄົບຖ້ວນ ໄດ້ບັນຈຸສັບຊ້ອນເຂົ້າໃນຕຳແໜ່ງພະນັກງານນຳພາ-ຄຸ້ມຄອງໃຫ້ຫຼາຍຂຶ້ນ.

ກອງປະຊຸມໃຫຍ່ຄັ້ງທີ II ຂອງສະຫະພັນແມ່ຍິງຮາກຖານກຳມາທິການບັນດາເຜົ່າ ຮຽກຮ້ອງບັນດາສະຫາຍສະມາຊິກ ຈົ່ງເພີ່ມທະວີຄວາມສາມັກຄີ, ເຊີດຊູຄວາມຮັບຜິດຊອບໃຫ້ສູງຂຶ້ນ, ສຸມສະຕິປັນຍາ, ຫົວຄິດປະດິດສ້າງ ແລະ ເຫື່ອແຮງ ເພື່ອສູ້ຊົນປະຕິບັດທິດທາງ, ຄາດໝາຍ ທີ່ກອງປະຊຸມໃຫຍ່ຄັ້ງທີ II ວາງອອກໃຫ້ປາກົດຜົນເປັນຈິງ.

**(ອານຸສອນ ພູມມີທອນ)**

# ປິດຊຸດເຝິກອົບຮົມພາສາອັງກິດໄລຍະສັ້ນ ເພື່ອຮັບໃຊ້ກອງປະຊຸມໄອປາ ຄັ້ງທີ 45



(ສພຊ) - ວັນສຸກທີ 5 ກໍລະກົດຜ່ານມາ ທີ່ໂຮງຮຽນນານາຊາດລາວ, ໄດ້ມີພິທີປິດຊຸດເຝິກອົບຮົມການຮຽນ-ການສອນພາສາອັງກິດໄລຍະສັ້ນ ໃຫ້ແກ່ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ໂດຍມີຄະນະຮັບຜິດຊອບ, ຄູ-ອາຈານ ແລະ ນັກເຝິກອົບຮົມ ເຂົ້າຮ່ວມຢ່າງພ້ອມພຽງ; ຈຸດປະສົງຂອງການເຝິກອົບຮົມ ກໍເພື່ອສ້າງທັກສະພື້ນຖານພາສາອັງກິດ ໃນການສື່ສານ ແລະ ປະສານງານ ໃຫ້ແກ່ການກະກຽມບຸຄະລາກອນເພື່ອຕ້ອນຮັບ, ພົວພັນປະສານງານ ແລະ ຕິດຕາມຄະນະຜູ້ແທນລັດຖະສະພາຕ່າງປະເທດທີ່ຈະເດີນທາງມາເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ທີ່ສະພາແຫ່ງຊາດລາວເປັນເຈົ້າພາບໃນເດືອນຕຸລາ 2024.

ການເຝິກອົບຮົມຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ເກັບກ່ຽວຄວາມຮູ້, ບົດຮຽນ, ປະສົບປະການຮ່ວມກັນ ພ້ອມທັງລົງເລິກເຝິກຊ້ອມການສົນທະນາ ແລະ ສື່ສານດ້ວຍພາສາອັງກິດ ກັບຄູຜູ້ເປັນເຈົ້າຂອງພາສາ ເຊິ່ງຈະໄດ້ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນການປະຕິບັດໜ້າທີ່ເປັນເສນາທິການທີ່ດີເພື່ອຮັບໃຊ້ກອງປະຊຸມໄອປາ ຄັ້ງທີ 45 ໃຫ້ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້; ຫຼັງຈາກຈົບຫຼັກສູດການຮຽນ-ການສອນແລ້ວ, ທາງໂຮງຮຽນໄດ້ອອກໃບຢັ້ງຢືນໃຫ້ແກ່ນັກເຝິກອົບຮົມ ຈຳນວນ 25 ທ່ານ.

ໃນໂອກາດນີ້, ທ່ານ ເພັດລາ ທັນທະວົງສາ ຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ, ກຳມາທິການການຕ່າງປະເທດ ໄດ້ມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດໃຫ້ແກ່ໂຮງຮຽນນານາຊາດລາວ ເພື່ອສະແດງຄວາມຂອບໃຈເປັນຢ່າງສູງທີ່ໄດ້ປະກອບສ່ວນສະໜັບສະໜູນທາງດ້ານການພັດທະນາຊັບພະຍາກອນມະນຸດໃຫ້ແກ່ສະພາແຫ່ງຊາດ.

# ສຳເລັດກອງປະຊຸມໃຫຍ່ຄັ້ງທີ II ໜ່ວຍຊາວໜຸ່ມຮາກຖານ ຫຄຊ



(ສພຊ) - ໜ່ວຍຊາວໜຸ່ມຮາກຖານຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ (ຫຄຊ) ໄດ້ຈັດກອງປະຊຸມໃຫຍ່ຄັ້ງທີII ໃນຕອນບ່າຍວັນທີ 05 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມຖະແຫຼງຂ່າວຂອງສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງສະຫາຍ ປອ. ເຜີດພອນໃຈ ສິນລະປະກິດ ຄະນະພັກຮາກຖານຄະນະເລຂາທິການ, ເລຂາໜ່ວຍພັກຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ, ສະຫາຍພອນແກ້ວ ຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ຄອນສີ ທຳມະວົງສາ ເລຂາໜ່ວຍຊາວໜຸ່ມຮາກຖານຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ; ມີບັນດາສະຫາຍຕາງໜ້າອົງການຈັດຕັ້ງມະຫາຊົນໜ່ວຍຮາກຖານ ຫຄຊ ແລະ ໜ່ວຍຊາວໜຸ່ມຮາກຖານພາຍໃນສພຊພ້ອມດ້ວຍສະມາຊິກຊາວໜຸ່ມພາຍໃນໜ່ວຍຮາກຖານດັ່ງກ່າວ ເຂົ້າຮ່ວມທັງໝົດ 32 ສະຫາຍ, ຍິງ 10 ສະຫາຍ.

ກອງປະຊຸມໃຫຍ່ໄດ້ເປັນເອກະສັນຮັບຮອງເອົາບົດລາຍງານການເມືອງຂອງໜ່ວຍຊາວໜຸ່ມຮາກຖານຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດທີ່ໄດ້ຕີລາຄາສະພາບການເຄື່ອນໄຫວໄລຍະຜ່ານມາ ໃນນັ້ນ, ໄດ້ຍົກໃຫ້ເຫັນດ້ານດີຜົນງານທີ່ຍາດມາໄດ້ ພ້ອມທັງດ້ານອ່ອນຂໍ້ຄົງຄ້າງ ແລະ ບັນດາສາເຫດທີ່ຕ້ອງປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວດີຂຶ້ນກວ່າເກົ່າ; ທັງກຳນົດທິດທາງການເຄື່ອນໄຫວວຽກງານຂອງຄະນະໜ່ວຍຊາວໜຸ່ມຮາກຖານ ຫຄຊ ໄລຍະ 5 ປີຕໍ່ໜ້າ (2024-2028) ໃນນັ້ນ, ຕົ້ນຕໍແມ່ນເພີ່ມທະວີການສຶກສາອົບຮົມການເມືອງແນວຄິດ, ພັດທະນາວຽກງານຊາວໜຸ່ມ ຕິດພັນກັບການເປັນເສນາທິການໃຫ້ແກ່ໜ່ວຍພັກຮາກຖານ ໄປພ້ອມກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ແລະ ແຜນການທີ່ວາງໄວ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ. ພ້ອມນັ້ນ, ຍັງໄດ້ຮັບຟັງການລາຍງານ ແລະ ຮັບຮອງເອົາບົດສຳຫຼວດການນຳພາຂອງຄະນະໜ່ວຍຊາວໜຸ່ມຮາກຖານ ກ່ຽວກັບການຊີ້ນຳ-ນຳພາຕໍ່ວຽກງານຊາວໜຸ່ມຕະຫຼອດໄລຍະຜ່ານມາ ເຊິ່ງຍົກໃຫ້ເຫັນດ້ານດີ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະຊາວໜຸ່ມຮາກຖານຊຸດໃໝ່ ຕ້ອງນຳໄປເປັນບົດຮຽນໃນການສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານ ກໍຄືການຜັນຂະຫຍາຍຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

ຜູ້ແທນກອງປະຊຸມໄດ້ໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດຊຸດໃໝ່ ບົນພື້ນຖານຕາມຫຼັກການລວມສູນປະຊາທິປະໄຕ, ຖືກຕ້ອງຕາມມາດຕະຖານເງື່ອນໄຂທີ່ໄດ້ກຳນົດໄວ້ ເຊິ່ງມີຜູ້ອອກສະໝັກ 7 ສະຫາຍ ຍິງ 2 ສະຫາຍ, ເລືອກເອົາ 5 ສະຫາຍ; ກອງປະຊຸມຄັ້ງປະ ຖົມມະລຶກຂອງຄະນະໜ່ວຍຊາວໜຸ່ມຮາກຖານຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ຊຸດທີ II ໄດ້ເປັນເອກະພາບເລືອກເອົາສະຫາຍ ນາງ ວິນາວັນ ສີປະໄພ ເປັນເລຂາ, ສະຫາຍສີລິຂວັນ ວົງສາສຸວັນທອງ ເປັນຮອງເລຂາ ແລະ ປະທານກວດກາ, ສະຫາຍ ລີຕູ້ ລີ ເປັນຮອງເລຂາ, ສະຫາຍ ນາງ ຈັນທະສອນ ຊາຕາຮັກແລະສະຫາຍອ້ວນ ວິປັດສາ ເປັນກຳມະການ.

ສະຫາຍ ປອ. ເຜີດພອນໃຈ ສິນລະປະກິດ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ເຊິ່ງສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານທີ່ຊາວໜຸ່ມຮາກຖານຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດຍາດມາໄດ້ໃນໄລຍະຜ່ານມາ. ພ້ອມນັ້ນ, ກໍໄດ້ເນັ້ນໜັກໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ເອົາໃຈໃສ່ສຶກສາອົບຮົມສະມາຊິກຊາວໜຸ່ມໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ມີຄຸນສົມບັດສິນທຳປະຕິວັດ, ຮັກຊາດ, ຮັກລະບອບປະຊາທິປະໄຕ ເປັນແບບຢ່າງໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ແລະ ການດຳລົງຊີວິດ; ສືບຕໍ່ປັບປຸງກົງຈັກ ແລະ ສະມາຊິກຊາວໜຸ່ມໃຫ້ເຂັ້ມແຂງຮອບດ້ານ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ ສາມາດຮັບປະກັນໄດ້ທາງດ້ານປະລິມານແລະຄຸນນະພາບ; ສືບຕໍ່ຮັກສາມູນເຊື້ອຄວາມສາມັກຄີ, ມີທັດສະນະມະຫາຊົນ, ມີຄວາມດຸໝັ່ນອົດທົນ, ຄົ້ນຄວ້າສຶກສາຮ່ຳຮຽນຍົກລະດັບຄວາມຮູ້-ຄວາມສາມາດ ໃນການປະຕິບັດວຽກງານໃຫ້ສູງຂຶ້ນເລື້ອຍໆ; ສ້າງ ແລະ ເຂົ້າຮ່ວມຂະບວນການເຄື່ອນໄຫວວຽກງານຊາວໜຸ່ມໃຫ້ຫຼາຍ, ມີບັນຍາກາດຟົດຟື້ນ, ຫ້າວຫັນ ໂດຍມີເນື້ອໃນຕິດພັນກັບການສຶກສາອົບຮົມໄປພ້ອມໆກັນ.

ກອງປະຊຸມຮຽກຮ້ອງໃຫ້ສະມາຊິກຊາວໜຸ່ມຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ຈົ່ງເຊີດຊູນ້ຳໃຈສາມັກຄີເປັນປຶກແຜ່ນ, ຍົກສູງຄວາມເປັນເຈົ້າຕົນເອງ, ເພີ່ມທະວີຄວາມຮັບຜິດຊອບ, ເສີມຂະຫຍາຍຫົວຄິດປະດິດສ້າງ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ II ໃນຄັ້ງນີ້ ໃຫ້ປາກົດຜົນເປັນຈິງ ແລະ ມີຜົນສຳເລັດຈົບງາມ.

**(ນາງ ອາລິນ ສຸພົມມະປະກິດ)**

# ສຳເລັດກອງປະຊຸມໃຫຍ່ຄັ້ງທີ II ໜ່ວຍຊາວໜຸ່ມຮາກຖານກົມຈັດຕັ້ງ-ພະນັກງານ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກົມຈັດຕັ້ງ-ພະນັກງານ ໄດ້ຈັດຂຶ້ນໃນຕອນບ່າຍວັນຈັນທີ 01 ກໍລະກົດ 2024 ໂດຍການເປັນປະທານຮ່ວມຂອງສະຫາຍ ແສງແກ້ວ ວົງນະລາດ ຄະນະພັກຮາກຖານຄະນະເລຂາທິການສະພາແຫ່ງຊາດ, ເລຂາໜ່ວຍພັກກົມຈັດຕັ້ງ-ພະນັກງານ, ສະຫາຍພອນແກ້ວຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ສິດທິກອນ ພະຈັນສິດທິ ເລຂາໜ່ວຍຊາວໜຸ່ມຮາກຖານກົມຈັດຕັ້ງ-ພະນັກງານ; ເຂົ້າຮ່ວມມີຜູ້ຕາງໜ້າຈາກບັນດາໜ່ວຍຊາວໜຸ່ມອ້ອມຂ້າງສະພາແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນພາຍໃນກົມດັ່ງກ່າວ.

ຜູ້ແທນກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ເນື້ອໃນຂອງບົດສະຫຼຸບການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມຮາກຖານກົມຈັດຕັ້ງ-ພະນັກງານ ຢ່າງມີເນື້ອໃນເລິກເຊິ່ງ ແລະ ເປັນເອກະພາບກັນຮັບຮອງເອົາບົດສະຫຼຸບດັ່ງກ່າວ ເປັນຕົ້ນແມ່ນການສັງເກດຕີລາຄາຜົນງານດ້ານຕັ້ງໜ້າ, ດ້ານອ່ອນ-ຂໍ້ຄົງຄ້າງ ໃນການເຄື່ອນໄຫວວຽກງານໄລຍະ 5 ປີຜ່ານມາ, ພ້ອມທັງວາງທິດທາງແຜນການທີ່ຈະຕ້ອງຈັດຕັ້ງປະຕິບັດໃນ 5 ປີຕໍ່ໜ້າ. ຜູ້ແທນກອງປະຊຸມ ໄດ້ພ້ອມກັນໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕທັງຖືກຕ້ອງສອດຄ່ອງກັບມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ອອກສະໝັກ 5 ສະຫາຍ ຍິງ 2 ສະຫາຍ, ເລືອກເອົາ 3 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະໜ່ວຍຊາວໜຸ່ມຮາກຖານກົມຈັດຕັ້ງ-ພະນັກງານ ຊຸດທີII ໄດ້ເຫັນດີເປັນເອກະພາບເລືອກເອົາສະຫາຍ ຈິດຕິສັກ ລາດສົມຄຳ ເປັນເລຂາ, ສະຫາຍ ນາງ ກອງມະນີ ແກ້ວມະນີວອນ ເປັນຮອງເລຂາ ແລະ ປະທານກວດກາ, ສະຫາຍ ນາງ ກຸ້ງແກ້ວ ວິໄລວົງ ເປັນຄະນະ.

ໂອກາດນີ້, ສະຫາຍ ແສງແກ້ວ ວົງນະລາດ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງຄະນະໜ່ວຍຊາວໜຸ່ມຊຸດຜ່ານມາແລະສະມາຊິກຊາວໜຸ່ມພາຍໃນໜ່ວຍທີ່ຍາດໄດ້ໃນຫຼາຍໆດ້ານ. ໂຄງປະກອບຂອງຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ນີ້ ສ່ອງແສງໃຫ້ເຫັນລັກສະນະສືບທອດ, ຜົນໄດ້ຮັບດັ່ງກ່າວນີ້ ດ້ານໜຶ່ງກໍຍ້ອນການເອົາໃຈໃສ່ຊີ້ນຳຂອງຄະນະໜ່ວຍພັກກົມຈັດຕັ້ງ-ພະນັກງານ, ຄະນະໜ່ວຍຊາວໜຸ່ມຮາກຖານຊຸດເກົ່າ, ດ້ານໜຶ່ງກໍຍ້ອນຄວາມຮັບຜິດຊອບດ້ານການເມືອງ ແລະ ຄວາມສາມັກຄີເປັນເອກະພາບຂອງບັນດາສະຫາຍຜູ້ແທນກອງປະຊຸມ; ເຖິງຢ່າງໃດກໍດີ, ຮຽກຮ້ອງມາຍັງບັນດາສະຫາຍໃນຄະນະໜ່ວຍຊາວໜຸ່ມຊຸດໃໝ່ ຕ້ອງເອົາໃຈໃສ່ເພີ່ມທະວີຄວາມສາມັກຄີ, ຄວາມເປັນເອກະພາບພາຍໃນໃຫ້ເປັນປຶກແຜ່ນ, ຍົກສູງຄວາມຮັບຜິດຊອບທາງການເມືອງ, ປັບປຸງແຜນການນຳພາ ແລະ ວິທີເຮັດວຽກໃຫ້ດີຂຶ້ນຕື່ມ ແລະ ຕ້ອງເປັນແບບຢ່າງໃນການດຳລົງຊີວິດໃຫ້ສົມກັບຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຂອງສະມາຊິກຊາວໜຸ່ມ ທີ່ໄດ້ເລືອກມາເປັນຕົວແທນແກນນຳຂອງໜ່ວຍຊາວໜຸ່ມ.

**(ອານຸສອນ ພູມມີທອນ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45; ລາຍງານຜົນສຳເລັດການຕ້ອນຮັບຄະນະຂອງທ່ານຮອງປະທານສະພາແຫ່ງຊາດສສ.ຫວຽດນາມ; ລາຍງານແຜນການຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ; ລາຍງານຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະພາແຫ່ງຊາດຊຸດທີ IX; ລາຍງານຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ. ນອກຈາກນັ້ນ, ຍັງໄດ້ຮັບຟັງລາຍງານການປັບປຸງ 3ຮ່າງມະຕິຄື: ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນ ການ 6 ເດືອນທ້າຍປີ2024, ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024, ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຄວາມຄືບໜ້າການແກ້ໄຂຕາມຜົນການກວດສອບປະຈຳປີ2023ຂອງອົງການກວດສອບແຫ່ງລັດ.

**(ຂ່າວ: ນາງ ກຸກກິກ ບຸດດາໄຊ, ພາບ: ສອນສັກ ວັນວິໄຊ)**




# ບຸນບັ້ງໄຟເພື່ອຫຍັງ?

**# ດົ້ນກົບເມກ**

ບຸນບັ້ງໄຟເຮັດເພື່ອຫຍັງ ? ເປັນບຸນທີ່ມີຈຸດປະສົງໃຫ້ຄົນເມົາ ຫຼື ໃຫ້ຄົນມ່ວນ ຫຼື ວ່າມີຈຸດປະສົງປຸກລະດົມຈິດໃຈມ່ວນຊື່ນກ່ອນລົງນາ; ບຸນບັ້ງໄຟເຮົາຈະເອົາສະຕິປັນຍາໄດ້ ຫຼື ບໍ່ ? ຫຼື ວ່າຫຼົງເຂົ້າໃຈວ່າ ເຖິງຍາມມ່ວນຍາມເມົາກໍເມົາເຕັມທີ່ ເພາະເຫດຜົນເວລາມັນອຳນວຍໃຫ້ເມົາ ຜູ້ຂຽນເຂົ້າໃຈວ່າ: ຖ້າຄົນສະຫຼາດ ເຂົາຈະຫຼິ້ນບຸນບັ້ງໄຟໃຫ້ມ່ວນບໍ່ແມ່ນໃຫ້ເມົາ ເພາະຖ້າເມົາແລ້ວຈະຂາດສະຕິ ເຊິ່ງເຮົາຄວນສຳນຶກວາດພາບຫວນຄືນວ່າ ພໍ່ແມ່ເຮົາພາຫຼິ້ນບຸນບັ້ງໄຟ ເພື່ອການພະນັນ ຫຼື ເພື່ອເມົາ...? ຖ້າວ່າຫຼິ້ນບຸນບັ້ງໄຟເພື່ອເມົາ ຊາວບ້ານຊື້ເຫຼົ້າເບຍດື່ມກິນກັນເປັນຄ່ານິຍົມກັນມາດົນແລ້ວບໍ? ບຸນບັ້ງໄຟນີ້ ຄະຕິທາງໂລກບອກວ່າ ເຮັດສະເພາະເບີກຜີມະເຫສັກຫຼັກເມືອງ ສ່ຽງຟ້າຂໍຝົນ ສ່ວນວ່າຄະຕິທາງພຸດທະສາສະໜາ ຖືວ່າເປັນການບູຊາ ພຸດທະຄຸນ ທຳມະຄຸນ ແລະ ສັງຄະຄຸນ ເພາະມັນຖືກເດືອນຫົກເພັງ... ຢ່າງໃດກໍຕາມ ຜູ້ຂຽນເອງກໍພະຍາຍາມອະທິບາຍຕື່ມວ່າ: ການເຮັດບັ້ງໄຟແຂ່ງຂັນກັນມີຫຼາຍປະເພດເຊັ່ນ: ບັ້ງໄຟໝື່ນ, ບັ້ງໄຟແສນ, ບັ້ງໄຟດອກໄມ້, ບັ້ງໄຟຕະໄລ, ບັ້ງໄຟຫາງ... ຊ່າງເຮັດບັ້ງໄຟກໍພາກັນເອ້ຢ້ອງໃຫ້ຈົບງາມ ມີສິລະປະລວດລາຍຄັກແນ່ ແຂ່ງຂັນທາງດ້ານສີມື ສິລະປະ ແລະ ຄຸນນະພາບຊ່າງເຮັດບັ້ງໄຟຄຳຖາມບັ້ງໄຟໃຜຈູດຂຶ້ນດີໄດ້ຫຍັງ? ຜູ້ຂຽນບໍ່ຂໍຕອບ ແຕ່ຢາກຕອບວ່າບັ້ງໄຟໃຜບໍ່ຂຶ້ນມີແຕ່ຖືກຫາມລົງຂີ້ຕົມເຊິ່ງເປັນນ້ຳເປື້ອນ ແຕ່ບໍ່ແມ່ນນ້ຳສົກກະປົກ, ເປົ້າໝາຍເພື່ອມ່ວນຊື່ນ ບໍ່ຢູ່ທີ່ການພະນັນ ແລະ ບໍ່ໄດ້ຢູ່ທີ່ກິນເຫຼົ້າເມົາສຸລາເປັນຫົວໃຈສຳຄັນ ເພາະແທ້ຈິງແລ້ວສຸລາເປັນພຽງສ່ວນປະກອບໃນພິທີກຳຫຍິ້ນເຫຼົ້າບວງສວງເຈົ້າທີ່ ແລະ ແບ່ງສູ່ກັນດື່ມ; ເຫຼົ້າສາໂທ ຊາວບ້ານເຮັດໄວ້ກິນຍາມບຸນບັ້ງໄຟສະເພາະເທົ່ານັ້ນ ເຊິ່ງປັດຈຸບັນນີ້ ຄົນເມົາເຫຼົ້າເມົາເບຍ ຂັບຂີ່ເກີດອຸບັດເຫດ ບໍ່ແມ່ນຍ້ອນເຫຼົ້າສາໂທບໍ ! ຜູ້ຂຽນຄິດວ່າແນວນັ້ນ.

ບຸນບັ້ງໄຟຫຼິ້ນເປື້ອນ ກັບຫຼິ້ນຜີ ຊາວບ້ານພາກັນຫາເອົາອະໄວຍະວະຍິງ-ຊາຍ ອວດໂຊຫົວມ່ວນທີ່ເຮັດດ້ວຍໄມ້ ແລະ ເນື້ອໃນມ່ວນອອນຊອນແມ່ນຄຳເຊີ້ງ ເຊິ່ງມັນກໍແມ່ນສິລະປະວັນນະຄະດີຂອງຊາດ ດັ່ງນັ້ນ ບໍ່ຄວນຄິດແບບຜິວເຜີນວ່າຮີດຄອງປະເພນີລາວພາໃຫ້ຄົນເມົາເສຍຄົນ...! ສະເໜີແລກປ່ຽນ.



## ຂຽນຄຳລາວໃຫ້ຖືກ

**# ຄູແສງ**

| ຖືກ | ຜິດ |
|---|---|
| ກິນເຂົ້າ | ~~ກິນເຂົ້າ~~ |
| ບ້ານເກີດ | ~~ບ້ານເກີດ~~ |
| ຂຶ້ນຂັ້ນໄດ | ~~ຂຶ້ນຂັ້ນໄດ~~ |
| ເງິນເຟີ້ | ~~ເງິນເຟີ້~~ |
| ສັກດິນາ | ~~ສັກດິນາ~~ |
| ສິລະປະ | ~~ສິລະປະ~~ |
| ສິນທຳ | ~~ສິນທຳ~~ |
| ເຊື່ອ / ຊື່ | ~~ເຊື່ອ / ຊື່~~ |
| ປຶ້ມອ່ານ | ~~ປຶ້ມອ່ານ~~ |
| ໄປຫຼິ້ນ | ~~ໄປຫຼິ້ນ~~ |




# ກະຕັກ – ຂະໜາດ ກະໂພດ – ພິລຶກ

ຄຳວິເສດ ຫຼືຄຳຄຸນນາມທີ່ເປັນຄຳຂະຫຍາຍບອກເຖິງລັກສະນະເກີນເລີຍໃນພາສາລາວແມ່ນມີຫຼາຍຄຳ ນອກຈາກຄຳວ່າ 'ກະດັດກະດໍ້' 'ກະດັກກະດໍ້' 'ກະເດ້ຍກະດໍ້' 'ກະດໍ້ກະເດ້ຍ' ແລ້ວ, ກໍຍັງມີຄຳວ່າ 'ກະເຕັກ', 'ຂະໜາດ', 'ກະໂພດ', 'ພິລຶກ' ດັ່ງຈະອະທິບາຍລາຍລະອຽດຕໍ່ໄປນີ້:

'ກະເຕັກ' ເປັນຄຳຄຸນນາມບອກເຖິງ "ຍິ່ງເກີນໄປ" ຂອງການກະທຳ ຫຼືປາກົດການໃດໜຶ່ງ. ຄຳນີ້ເດີມຄືງມາຈາກຄຳວ່າ 'ກໍເຕັກ' ເຊິ່ງ 'ກໍ' ແມ່ນຄຳຕໍ່ທີ່ເວລາເວົ້າມັກຈະພ້ຽນສຽງເປັນ 'ກະ', ສ່ວນ 'ເຕັກ' ແຕ່ເດີມແມ່ນຄຳກິລິຍາ ທີ່ໝາຍເຖິງ "ຂົ່ມ ຍັນ ທຸບລົງໄປຢ່າງໜັກ" ເຊັ່ນ ເຕັກລົງໄປ; ລາວຖືກຂົ່ມເຫງເຕັງເຕັກ. ຕໍ່ມາຄຳວ່າ 'ເຕັກ' ໄດ້ເພີ່ມປະເພດຄຳຂຶ້ນຕື່ມເປັນຄຳຄຸນນາມ. ເວລາໃຊ້ກໍມັກຈະເປັນຄຳຂະຫຍາຍໃຫ້ແກ່ຄຳວ່າ 'ແຮ່ງ' ທີ່ໝາຍເຖິງ 'ຍິ່ງ' ເປັນ 'ແຮ່ງເຕັກ' ເຊັ່ນ

- ໝູ່ຂອງຂ້ອຍແຮ່ງເຕັກ ພາກັນແຫ່ໄປກິນເກືອບວ່າຊຸ່ມື.

ຄຽງຄູ່ກັນນັ້ນ 'ເຕັກ' ຍັງມັກຈະປາກົດໂຕຢູ່ກັບຄຳວ່າ 'ກະ' ທີ່ພ້ຽນສຽງມາຈາກຄຳຕໍ່ 'ກໍ' ເປັນ 'ກະເຕັກ' ເພື່ອເພີ່ມຄວາມໜັກແໜ້ນຂຶ້ນຕື່ມ, ແຕ່ເວລາໃຊ້ ກໍຍັງຕ້ອງຂະຫຍາຍຄຳວິເສດ 'ແຮ່ງ' ເປັນ 'ແຮ່ງກະເຕັກ' ເຊັ່ນ

- ໃນເລື່ອງສໍ້ລາດບັງຫຼວງ ໝໍນີ້ແຮ່ງກະເຕັກກວ່າໝໍນັ້ນ.

'ຂະໜາດ' ທີ່ເປັນຄຳຄຸນນາມ ໝາຍເຖິງ "ຍິ່ງ, ທີ່ສຸດ, ເກີນ, ກາຍ" ເຊັ່ນ

- ເຝີຮ້ານນີ້ແຊບຂະໜາດ.
- ຮູບເງົາເລື່ອງນີ້ມ່ວນຂະໜາດ.
- ລາວມັກຍ້ອງສາວນັ້ນວ່າງາມຂະໜາດ.

'ກະໂພດ' ເປັນຄຳວິເສດ ຫຼືຄຳຄຸນນາມ ເຊິ່ງຄວາມໝາຍຈະເນັ້ນຢູ່ໃນພະຍາງທີ 2 'ໂພດ' ທີ່ໝາຍເຖິງ "ເລີຍ, ຫຼາຍ, ເຮັ່ງ, ເກີນ" ເຊັ່ນ

- ມື້ນີ້ຮ້ອນໂພດ.
- ຕຳໝາກຫຸ່ງຄົກນີ້ເຜັດໂພດ.
- ລາວຂັບລົດໄວໂພດ ຈົນຢຽບເບກບໍ່ທັນ.

ຖ້າຕື່ມຄຳຕໍ່ 'ກໍ' ໃສ່ໜ້າ, ເວລາເວົ້າກໍມັກຈະພ້ຽນສຽງເປັນ 'ກະ' ກາຍເປັນ 'ກະໂພດ' ເຊິ່ງມັກໃຊ້ໃນຄວາມໝາຍຂອງການເຮັດເກີນເລີຍ ເຊັ່ນ

- ເຈົ້າກະໂພດດອກ, ເຮັດສໍ່ານີ້ກະເຮັດບໍ່ໄດ້ !
- ແມ່ຄ້າຮ້ານນັ້ນກະໂພດແທ້ໆໄດ໋ ຫຼຸດລ້ານພັນກີບກະບໍ່ໄດ້.
- ລາວກະໂພດອີ່ຫຼີໄດ໋ ເລື່ອງນ້ອຍໆຂະໜາດນີ້ ກະແກ້ບໍ່ຕົກ.

'ພິລຶກ' ເປັນຄຳຄຸນນາມ ໝາຍເຖິງ "ໂພດ, ປະຫຼາດ, ໜ້າງຶດງໍ້, ອັດສະຈັນ" ເຊັ່ນ

- ທົ່ງໄຫຫີນຈັ່ງແມ່ນກວ້າງພິລຶກ ຍ່າງເໝີດມື້ກະບໍ່ທົ່ວ.
- ເຈົ້າເຄີຍຟັງເພງ 'ງາມພິລຶກ' ຮ້ອງໂດຍ ບົວເງິນ ຊາພູວົງ ບໍ່ ?
- ລາວກໍເຮັດພິລຶກໂພດດອກ, ກິນນ້ຳບາດດຽວໝົດສອງຕຸກໃຫຍ່ !

'ພິລຶກ' ຍັງສາມາດເວົ້າເປັນຄຳໂຕງໂຕຍ ເຊິ່ງຈະເຮັດໃຫ້ຄວາມໝາຍໜັກແໜ້ນຂຶ້ນຕື່ມ ເຊັ່ນ ພິລຶກພິໂລ, ພິລຶກກຶກກື, ພິລຶກຫຶກໜາ...

ທັງສີ່ຄຳທີ່ຍົກມານີ້ ລ້ວນແຕ່ມີຄວາມໝາຍວ່າ "ເກີນເລີຍ", ແຕ່ເວລາໃຊ້ກໍມີລັກສະນະສະເພາະຂອງໃຜຂອງມັນຄືດັ່ງທີ່ໄດ້ອະທິບາຍມາຂ້າງເທິງ. ແຕ່ຄຳສັບຊຸມນີ້ ບາງຄຳກໍສາມາດມາຊ້ອນໃສ່ກັນໄດ້ ເຊັ່ນ

- ລາວກະໂພດພິລຶກດອກ. (ກະໂພດ + ພິລຶກ)
- ສາວນັ້ນຈັ່ງແມ່ນງາມພິລຶກຂະໜາດ. (ພິລຶກ + ຂະໜາດ)




# ວິທີເຮັດວຽກ

**ພາກທີ 6**

**ວິທີນຳ**

ຖ້າວ່າມີແຕ່ຄວາມຫ້າວຫັນຂອງປະຊາຊົນ ບໍ່ມີຄວາມຫ້າວຫັນຂອງກຸ່ມແກ່ນສານຈັດຕັ້ງ ແລະ ຊັກດຶງນຳນັ້ນ, ຄວາມຫ້າວຫັນຂອງປະຊາຊົນກໍບໍ່ແໜ້ນໜຽວ ແລະ ບໍ່ກ້າວໜ້າ. ບໍ່ວ່າບ່ອນໃດ ເມື່ອມີປະຊາຊົນແລ້ວກໍຍ້ອນມີຄົນສາມຈຳພວກຄື: ຈຳພວກຫ້າວຫັນ, ຈຳພວກປານກາງ ແລະ ຈຳພວກອ່ອນ. ໃນສາມຈຳພວກນີ້ ແມ່ນຈຳພວກປານກາງທີ່ຢູ່ເຄິ່ງກາງນັ້ນຫຼາຍກວ່າໝູ່ໝົດ, ຈຳພວກຫ້າວຫັນ ແລະ ຈຳພວກອ່ອນນັ້ນໜ້ອຍກວ່າ.

ເພາະສະນັ້ນ ຜູ້ນຳຕ້ອງໃຊ້ຄົນຈຳນວນຫ້າວຫັນນັ້ນເປັນແກ່ນສານໃຫ້ແກ່ການນຳ, ອາໄສພວກແກ່ນສານນັ້ນ ເຊີດຊູຈຳພວກປານກາງຂຶ້ນ ແລະ ແກ່ດຶງເອົາພວກອ່ອນນັ້ນກ້າວຂຶ້ນຕື່ມ. ກຸ່ມແກ່ນສານນັ້ນແມ່ນເກີດເປັນຂຶ້ນມາຈາກການຕໍ່ສູ້ຢູ່ພາຍໃນໝູ່ປະຊາຊົນເອງ, ບໍ່ແມ່ນວ່າຈະມີມາທາງນອກໝູ່ປະຊາຊົນ ແລະ ຢູ່ຫ່າງໄກຈາກປະຊາຊົນ.

ແຕ່ລະການຕໍ່ສູ້ນັ້ນ ຕາມທຳມະດາກໍເຄີຍມີສາມວາລະ ດ້ວຍກັນຄື: ວາລະຕົ້ນ, ວາລະກາງ ແລະ ວາລະປາຍ. ກຸ່ມແກ່ນສານທີ່ນຳວຽກງານຢູ່ໃນການຕໍ່ສູ້ແຕ່ລະຄັ້ງ, ບໍ່ອາດ ແລະ ບໍ່ຄວນ ເຮັດແນວເກົ່າຢູ່ສະເໝີ. ໃນແຕ່ລະວາລະນັ້ນ ຕ້ອງໝັ່ນເລືອກຊັ້ນຄົນຜູ້ຫ້າວຫັນຢູ່ໃນວາລະນັ້ນຂຶ້ນ, ເພື່ອທົດແທນຄົນເກົ່າທີ່ຖືກຖອນອອກ ຫຼື ບໍ່ເໝາະກັບໜ້າທີ່ ຫຼື ເປັນຄົນເສຍໄປ.

ອ່ານຕໍ່ສະບັບໜ້າ...



## ສຸກສະບາຍທາຍໂລດ

# 7 ຄຸນປະໂຫຍດຈາກຂີງ

ໂດຍ: ທິວກະທິ



ຂີງເປັນສະໝຸນໄພປະຈຳບ້ານທີ່ມີຄຸນປະໂຫຍດໃນການປິ່ນປົວພະຍາດ ແລະຍັງເປັນສະໝຸນໄພທີ່ສາມາດໃຊ້ເພີ່ມລົດຊາດໃຫ້ອາຫານໄດ້ອີກດ້ວຍ ເຊິ່ງ 7 ຄຸນປະໂຫຍດຂອງຂີງມີດັ່ງນີ້:

1. ຊ່ວຍຫຼຸດນໍ້າໜັກ;
2. ຊ່ວຍຫຼຸດນໍ້າຕານໃນເລືອດ, ຕ້ານພະຍາດເບົາຫວານ;
3. ຊ່ວຍໃຫ້ປະສິດທິພາບຂອງສະໝອງດີຂຶ້ນ.
4. ຂີງມີລິດເປັນຢາແກ້ປວດ ຈຶ່ງຊ່ວຍຫຼຸດອາການອັກເສບໄດ້.
5. ຂີງສາມາດຫຼຸດອາການຈຸກແໜ້ນ.
6. ຊ່ວຍປິ່ນປົວອາການເຈັບຫົວໄມເກຣນ ຫຼື ເຈັບຫົວເບື້ອງດຽວໄດ້.
7. ຊ່ວຍຫຼຸດຄວາມຮຸນແຮງຈາກອາການຂອງພະຍາດພູມແພ້.

ການກິນຂີງ ຫຼື ດື່ມເຄື່ອງດື່ມທີ່ມີສ່ວນປະສົມຈາກຂີງເປັນປະຈຳ ສາມາດຊ່ວຍບຳລຸງຮ່າງກາຍຂອງທ່ານໄດ້ດີຫຼາຍ. ແຕ່ແນວໃດກໍຕາມຄວນຢູ່ໃນປະລິມານທີ່ເໝາະສົມກັບຮ່າງກາຍ ແລະ ຄວນກິນອາຫານໃຫ້ຄົບ 5 ໝວດຈຶ່ງຈະດີທີ່ສຸດ.



## ອາດ ກະວີລາວ

## ຕາມຮອຍລຸງ

### (ແດ່ວັນຄ້າຍວັນເກີດປະທານສຸພານຸວົງ)

❊ ທຣຽມນີ້ແສນຊາບຊຶ້ງ ຝັງເລິກດວງລືໄທ
ພູມໃຈໃນຜົນງານ ທ່ານປະທານພຽນສ້າງ
ແປງປູທາງເດີນໄວ້ ເປັນທວນໄຟເຍືອງສ່ອງ
ຊື່ສຽງດັງກຽດກ້ອງ ເບື້ອງຫລັງກອງທັບສ້າງ ວາງໄວ້ແບບແຜນ

❊ ແມ່ນວຽກໜັກບໍ່ຢ້ານ ຖວາຍມອບຊີວີ
ສະຫຼະຊີບນຳພາລາວ ຕ່ອຍຕີມານຮ້າຍ
ລຸງໄດ້ທຳລາຍມ້າງ ການຄອງເມືອງສະໄໝເກົ່າ
ຍາດເອົາເອກະລາດໄວ້ ປະຊາໄດ້ໂຫ່ສະຫລອງ

❊ ໃຈຂອງລຸງແກ່ນກ້າ ຫອມຮັກປະຊາຊົນ
ເຮົາຄົນລາວຫວງແຫນ ເຊີດຊູດັງກ້ອງ
ທົ່ວໂລກາຍໍຍ້ອງ ຜົນງານຂອງທ່ານ
ປະທານສຸພານຸວົງຊື່ນີ້ ລືກ້ອງຊ່າໄກ

❊ ພີ່ນ້ອງລາວຈຶ່ງໄດ້ ວິໄລຮຸ່ງເຮືອງສີ
ຍ້ອນວ່າຄົນລາວມີ ທ່ານຜູ້ນຳຫານກ້າ
ປັນຍາດີໃສແຈ້ງ ເປັນແວ່ນແຍງເຍືອງສ່ອງ
ລາວເຮືອງຮອງຮຸ່ງເຫລື້ອມ ປະຊາແຍ້ມຊື່ນບານ

❊ ປະຕິຍານຕໍ່ຕັ້ງ ຝັງເຊື່ອຄຳສອນ
ຈະບໍ່ຄອນແຄນໄຫວ ຊິໄຕ່ຕາມລຸງສ້າງ
ແບບຢ່າງລຸງມີໄວ້ ນຳໄປສານຕໍ່
ບໍ່ໃຫ້ເສຍຊາດເຊື້ອ ລຸງສ້າງສືບມາ ດອກນາ!

❊ ຂໍຈຳຈາລຶກໄວ້ ເນົາແນບໃນຊວງ
ດຸ່ງເດີນໄປຕາມຮອຍ ຂີດໝາຍວາງໄວ້
ໜັກເອົາເບົາໃຈສູ້ ມີເກງກົວໄຫວຫວັ່ນ
ເອົາບົດຮຽນທ່ານນັ້ນ ເປັນແກ້ວແວ່ນແຍງ ແທ້ນາ!










## ສ້າຍສາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສ້ຽມທ້ຽນ

❊ **ວັນ**ທີ **13 ກໍລະກົດ**ມາຈະເຖິງນີ້ແມ່ນວັນຄ້າຍວັນເກີດຂອງ**ປະທານ ສຸພານຸວົງ ຄົບຮອບ 115 ປີ** ແລະໂອກາດດຽວກັນນີ້ ຍັງແມ່ນວັນອະນຸລັກສັດນໍ້າສັດປ່າຂອງລາວ ຊາວປະຊາດີໃຈ ຮ່ວມໂຮມສະຫຼອງຕ້ອນ ລະນຶກບຸນຄຸນໄວ້ເໝືອນທອນໄຟເຍືອງສ່ອງລໍ່ເລີ້ນຊອບ ພີ່ນ້ອງງົດລ່າສັດ ທັງຢູ່ບົກ ແລະ ນໍ້າ ກະທໍາສ້າງສ່ອນກຸສົນ **ຊອບແລ້ວ!**

❊ **ວັນ**ທີ **2 ກໍລະກົດຜ່ານມາ** ສຳນັກງານນາຍົກລັດຖະມົນຕີ ໄດ້ມີ**ຂໍ້ຕົກລົງແຕ່ງຕັ້ງຄະນະສະເພາະກິດ** ເພື່ອລົງເລີກຄົ້ນຄວ້າບັນຫາລາຄາສິນຄ້າແລະອັດຕາເງິນເຟີທີ່ເພີ່ມຂຶ້ນສູງ ບັນຫາຖຸງຂອດຄ້າງ ຄາຂ້ອງປະການໃດ ສັງລວມຍໍ່ຍົກ ເພື່ອກຽມປັບປຸງແກ້ ປະຊາແລຄອຍຈ້ອງ ມອງບັນຫາຊີຫຼຸດຜ່ອນ ອອນສະເໜີຜ່ານຫ້ອງ ປະຊຸມເບື້ອງບ່ອນສະພາ **ນັ້ນນາ!**

## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ສ້ຽວອິນາທີ

**ຊາຍໜຸ່ມຖາມພະເຈົ້າວ່າ:** ແມ່ນແທ້ບໍ່ ທີ່ເຮົາວ່າພັນປີແສງ ສຳລັບເຈົ້າສຳກັບສ້ຽວອິນາທີ
**ພະເຈົ້າ:** ແມ່ນ
**ຊາຍໜຸ່ມ:** ແມ່ນແທ້ບໍ່? ທີ່ເຈົ້າສາມາດເສກເງິນຫຼາຍລ້ານ ໄດ້ພາຍໃນສ້ຽວອິນາທີ
**ພະເຈົ້າ:** ແມ່ນ
**ຊາຍໜຸ່ມ:** ຄັນຊັ້ນ ຂ້ອຍຂໍເງິນພັນລ້ານໄດ້ບໍ່?
**ພະເຈົ້າ:** ແນ່ນອນວ່າໄດ້ ພຽງແຕ່ອິນາທີດຽວ



## ຄະຕິເຕືອນໃຈ

# ດອກຫຍ້າ

"ເກັ່ງກໍພາດ ສະຫຼາດກໍຍັງພັ້ງ
ລະວັງກໍຜິດ ເພາະຊີວິດບໍ່ມີຫຍັງແນ່ນອນ"

## ສອງຮອງປະທານ...

(ຕໍ່ຈາກໜ້າ 3)

ພັດທະນາປະເທດຊາດ; ສະແດງຄວາມຊົມເຊີຍທີ່ສະພາແຫ່ງຊາດລາວ ຫາກໍສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX. ເພື່ອເຮັດໃຫ້ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດສອງປະເທດມີຄວາມໝາຍ, ແທດຕົວຈິງ ແລະ ມີປະສິດທິຜົນ, ສະຫາຍໄດ້ສະເໜີສະພາແຫ່ງຊາດສອງປະເທດໃຫ້ບຸລິມະສິດຊຸກຍູ້ບັນດາເນື້ອໃນຄື: ສືບຕໍ່ສ້າງແລວທາງທາງດ້ານກົດໝາຍທີ່ສະດວກໃຫ້ແກ່ລັດຖະບານສອງປະເທດ ປະຕິບັດບັນດາຂໍ້ຕົກລົງຮ່ວມມືທີ່ໄດ້ລົງນາມຢ່າງມີປະສິດທິຜົນ; ຍູ້ແຮງການຜັນຂະຫຍາຍບັນດາໂຄງການສຳຄັນລະຫວ່າງສອງປະເທດ ກໍຄືບັນດາເນື້ອໃນທີ່ໄດ້ຮັບການຕົກລົງທີ່ກອງປະຊຸມຄັ້ງທີ 46 ຂອງຄະນະກຳມະການລະຫວ່າງລັດຖະບານຫວຽດນາມ-ລາວ; ສືບຕໍ່ຮັກສາການພົວພັນແລກປ່ຽນຢ່າງປົກກະຕິຂອງການນຳຂັ້ນສູງ ແລະ ທຸກຂັ້ນລະຫວ່າງສອງສະພາແຫ່ງຊາດ; ເພີ່ມທະວີການແລກປ່ຽນປະສົບການໃນການພັດທະນານະໂຍບາຍ ແລະ ກົດໝາຍ ໃນການຄຸ້ມຄອງມະຫາພາກ ແລະ ການຟື້ນຟູເສດຖະກິດ-ສັງຄົມ; ຊຸກຍູ້ການແລກປ່ຽນປະຊາຊົນແລະການຮ່ວມມືຢູ່ທ້ອງຖິ່ນ, ພິເສດແມ່ນການຮ່ວມມືລະຫວ່າງຄະນະຜູ້ແທນສະພາແຫ່ງຊາດແລະສະພາປະຊາຊົນທ້ອງຖິ່ນ; ຊຸກຍູ້ ແລະ ສ້າງເງື່ອນໄຂສະດວກໃຫ້ວິສາຫະກິດຫວຽດນາມ ເຄື່ອນໄຫວ ແລະ ລົງທຶນດຳເນີນທຸລະກິດຢູ່ລາວ, ສຸມໃສ່ເຊື່ອມຕໍ່ເສດຖະກິດ 2 ປະເທດ, ມຸ່ງໄປເຖິງເສດຖະກິດຂອງລາວທາງທະເລ (ທ່າເຮືອຫວຸງອາງ Vũng Áng ແລະທ່າເຮືອຫວຽດນາມ); ເພີ່ມທະວີການໂຄສະນາເຜີຍແຜ່, ສຶກສາອົບຮົມປະຊາຊົນທຸກຊັ້ນຄົນ, ພິເສດແມ່ນຮຸ່ນໜຸ່ມຂອງສອງປະເທດ ກ່ຽວກັບມູນເຊື້ອຂອງການພົວພັນແບບພິເສດຫວຽດນາມ-ລາວ; ສືບຕໍ່ສົມທົບກັນຕິດຕາມກວດກາ ແລະ ຊຸກຍູ້ບັນດາຂໍ້ຕົກລົງລະຫວ່າງສອງປະເທດ; ສົມທົບກັນແກ້ໄຂຄວາມຫຍຸ້ງຍາກ ແລະ ອຸປະສັກ ໃຫ້ແກ່ບັນດາໂຄງການຮ່ວມມືຍຸດທະສາດ; ສະພາແຫ່ງຊາດຫວຽດນາມ ພ້ອມແລ້ວທີ່ຈະສະໜັບສະໜູນສະພາແຫ່ງຊາດລາວໃນການຈັດກອງປະຊຸມໃຫຍ່ AIPA ຄັ້ງທີ 45 ໃນເດືອນຕຸລາທີ່ຈະມາເຖິງນີ້ ດ້ວຍຄວາມສາມາດບົ່ມຊ້ອນດ້ານສິ່ງອຳນວຍຄວາມສະດວກຕ່າງໆ, ຄາດວ່າສະຫາຍປະທານສະພາແຫ່ງຊາດເຈິ່ນ ແທງ ເໝິນ (Trần Thanh Mẫn) ຈະເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ AIPA-45 ແລະມາຢ້ຽມຢາມລາວໃນໂອກາດດັ່ງກ່າວ; ສືບຕໍ່ແລກປ່ຽນບັນດາເນື້ອໃນກ່ຽວກັບການຈັດພິມປຶ້ມ "50 ປີ ແຫ່ງການພົວພັນລະຫວ່າງສະພາແຫ່ງຊາດ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະ ສະພາແຫ່ງຊາດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ໄດ້ຮັບຜົນສຳເລັດ.

**(ຂ່າວ: ກົງທະນຸຄຳ ພິພັດເສລີ, ພາບ: ສອນສັກ ວັນວິໄຊ)**

## ມອບ-ຮັບ...

(ຕໍ່ຈາກໜ້າ 1)

ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງກຳມາທິການໃນໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າ. ຈາກນັ້ນ ທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຂຶ້ນຜ່ານມະຕິຄະນະປະຈຳສະພາແຫ່ງຊາດວ່າດ້ວຍການສັບຊ້ອນວຽກງານຂອງປະທານກຳມາທິການພາຍໃນສະພາແຫ່ງຊາດ ສະບັບເລກທີ 93/ຄປຈ, ລົງວັນທີ 02 ກໍລະກົດ 2024 ແລະ ມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາການເລືອກຕັ້ງກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ຮັບຮອງເອົາການແຕ່ງຕັ້ງປະທານກຳມາທິການວັດທະນະທຳ-ສັງຄົມ ສະບັບເລກທີ 193/ສພຊ, ລົງວັນທີ 02 ກໍລະກົດ 2024. ຫຼັງຈາກນັ້ນ, ກໍໄດ້ມີພິທີລົງນາມມອບ-ຮັບໜ້າທີ່ລະຫວ່າງຜູ້ເກົ່າ-ຜູ້ໃໝ່ ຄື: ທ່ານ ຄຳແພງ ວິລະພັນ ຖືກມອບໝາຍໜ້າທີ່ເປັນປະທານກຳມາທິການກົດໝາຍ (ຜູ້ໃໝ່), ທ່ານ ນາງ ທຸມມາລີ ວົງພະຈັນ ຖືກມອບໝາຍໜ້າທີ່ເປັນປະທານກຳມາທິການຍຸຕິທຳ (ຜູ້ໃໝ່) ແລະ ທ່ານ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຖືກມອບໝາຍໜ້າທີ່ເປັນກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ (ຜູ້ໃໝ່).

ໃນພິທີມອບ-ຮັບ ຄັ້ງນີ້, ທ່ານ ປອ.ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມ ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຜົນງານ, ຜົນສຳເລັດຂອງສອງກຳມາທິການຍຸຕິທຳ ແລະວັດທະນະທຳ-ສັງຄົມ, ຜົນສຳເລັດໃນການຊີ້ນຳ-ນຳພາການປະຕິບັດໜ້າທີ່ຂອງສອງທ່ານປະທານໃນໄລຍະຜ່ານມາ. ທ່ານຍັງໄດ້ມີຄຳເຫັນຊີ້ນຳໃນການຈັດຕັ້ງປະຕິບັດໜ້າທີ່ຂອງກຳມາທິການກົດໝາຍ, ກຳມາທິການຍຸຕິທຳ ແລະ ກຳມາທິການວັດທະນະທຳ-ສັງຄົມ ໂດຍໃຫ້ເອົາໃຈໃສ່ໃນການນຳພາວຽກງານການ ເມືອງ-ແນວຄິດ, ສ້າງໃຫ້ພະນັກງານມີຈັນຍາບັນ, ຈັນຍາທຳ, ມີຄວາມດຸໝັ່ນ, ມີຫົວຄິດປະດິດສ້າງໃນການຄົ້ນຄວ້າສ້າງ ແລະປັບປຸງກົດໝາຍ; ການແກ້ໄຂວຽກງານຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໃຫ້ຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບຄວາມເປັນຈິງ; ໃຫ້ເພີ່ມທະວີຄວາມສາມັກຄີພາຍໃນ, ມີການແບ່ງງານແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ; ມີແບບແຜນວິທີເຮັດວຽກທີ່ໂລ່ງລ່ຽນ, ມີການປະສານງານພາຍໃນກຳມາທິການ, ພາຍໃນສະພາແຫ່ງຊາດ ແລະກັບກະຊວງ, ອົງການ ເພື່ອພ້ອມກັນເຮັດສຳເລັດໜ້າທີ່ທີ່ຖືກມອບໝາຍ, ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະດິດ)**

## ປະທານ...

(ຕໍ່ຈາກໜ້າ 1)

ໄດ້ສະແດງຄວາມຊົມເຊີຍຕໍ່ສະຫາຍ ໂຕ ເລິມ ທີ່ໄດ້ຮັບເລືອກຕັ້ງເປັນປະທານປະເທດໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ XV ເມື່ອທ້າຍເດືອນພຶດສະພາຜ່ານມາ ທັງສະແດງຄວາມຂອບໃຈເປັນຢ່າງສູງທີ່ໄດ້ເລືອກ ສປປ ລາວ ເປັນປະເທດທຳອິດໃນການຢ້ຽມຢາມຕ່າງປະເທດໃນນາມປະທານປະເທດ ແຫ່ງ ສສ. ຫວຽດນາມ ແລະ ຝາກຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ ແລະ ຄວາມສາມັກຄີຮັກແພງຖານສະຫາຍອ້າຍນ້ອງ ໄປຍັງສະຫາຍ ເຈິ່ນ ແທງ ເໝິນ (Trần Thanh Mẫn) ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາສະຫາຍການ ນຳຂອງສະພາແຫ່ງຊາດ, ລັດຖະບານ ແລະ ປະຊາຊົນຫວຽດນາມອ້າຍນ້ອງ. ພ້ອມນັ້ນ, ຍັງໄດ້ຕີລາຄາສູງຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ, ຮອບດ້ານ, ໜ້າສັນລະເສີນ ທີ່ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ຍາດມາໄດ້ໃນຕະຫຼອດໄລຍະຜ່ານມາ ໂດຍສະເພາະໃນຊຸມປີມໍ່ໆມານີ້ ເຖິງວ່າສະພາບການເສດຖະກິດໂລກແລະພາກພື້ນ ມີຫຼາຍສິ່ງທ້າທາຍ, ແຕ່ພາຍໃຕ້ການນຳພາອັນຖືກຕ້ອງ, ສະຫຼາດສ່ອງໃສ, ເດັດດ່ຽວ ຂອງພັກກອມມູນິດຫວຽດນາມອັນມີສະຫາຍເລຂາທິການໃຫຍ່ ຫງວຽນ ຝູ ຈ້ອງ (Nguyễn Phú Trọng) ເປັນຜູ້ນຳໜ້າ, ການບັນຊາທີ່ເຂັ້ມແຂງຂອງລັດຖະບານ, ການຕິດຕາມກວດກາທີ່ເຂັ້ມງວດຂອງສະພາແຫ່ງຊາດ ເຮັດໃຫ້ຫວຽດນາມ ສາມາດຮັກສາຈັງຫວະການພັດທະນາເສດຖະກິດ-ສັງຄົມໃນລະດັບສູງ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ, ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມເຂັ້ມແຂງ, ການຕ່າງປະເທດໄດ້ຮັບການເປີດກວ້າງ ເຮັດໃຫ້ບົດບາດອິດທິພົນຂອງຫວຽດນາມນັບມື້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ຕີລາຄາສູງຕໍ່ການແລກປ່ຽນການຢ້ຽມຢາມຢ່າງປົກກະຕິຂອງບັນດາສະຫາຍການນຳຂັ້ນສູງຂອງພັກ-ລັດ, ທ້ອງຖິ່ນຂອງສອງປະເທດ ໃນຕະຫຼອດໄລຍະຜ່ານມາ; ພິເສດແມ່ນການທີ່ສູນກາງພັກກອມມູນິດຫວຽດນາມ ໄດ້ຈັດຊຸດຄົ້ນຄວ້າ ແລະ ແລກປ່ຽນຫົວຂໍ້ສະເພາະ ໃຫ້ແກ່ການນຳຍຸດທະສາດຂອງສູນກາງພັກປະຊາຊົນປະຕິວັດລາວ ສະໄໝທີ XI ຈຳນວນຫຼາຍຊຸດ ເປັນການສະແດງໃຫ້ເຫັນເຖິງຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະກັນຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແບບເຂົ້າເມັດຫັກ, ຜັກເສັ້ນແບ່ງ, ສຸກທຸກຢູ່ຄຽງຂ້າງກັນສະເໝີມາ. ສະເພາະການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ໄດ້ຮັບການເສີມຂະຫຍາຍທາງກວ້າງແລະທາງເລິກສະເໝີມາ, ໃນໄລຍະມໍ່ໆມານີ້ ສອງສະພາແຫ່ງຊາດໄດ້ມີການແລກປ່ຽນການຢ້ຽມຢາມການນຳຂັ້ນສູງໃນລະດັບຕ່າງໆເປັນຕົ້ນຂັ້ນປະທານສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການ, ສະມາຊິກສະພາແຫ່ງຊາດ ຕະຫຼອດເຖິງສະມາຊິກສະພາຂັ້ນທ້ອງຖິ່ນນຳກັນ, ຮ່ວມກັນຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນຕ່າງໆ; ພິເສດ ເພື່ອນຫວຽດນາມໄດ້ສິ່ງຊ່ຽວຊານມາໃຫ້ບົດຮຽນແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະພະນັກງານສະພາແຫ່ງຊາດລາວ, ມີການພົວພັນຮ່ວມມືແລະສະໜັບສະໜູນເຊິ່ງກັນແລະກັນຢ່າງແໜ້ນແຟ້ນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ຍັງແຈ້ງໃຫ້ຊາບວ່າ: ລະຫວ່າງວັນທີ 03-05 ກໍລະກົດຜ່ານມາ, ສະຫາຍ ຫງວຽນ ຄັກ ດິ້ງ (Nguyễn Khắc Định) ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດໄດ້ມາຢ້ຽມຢາມ, ເຮັດວຽກ ແລະ ຮ່ວມກັບສະພາແຫ່ງຊາດລາວ ຈັດກອງປະຊຸມສຳມະນາວິທະຍາສາດກ່ຽວກັບການປັບປຸງລັດຖະທຳມະນູນ ແລະ ບົດຮຽນການຄົ້ນຄວ້ານິຕິບັນຍັດ ເປັນການນຳເອົາບົດຮຽນທີ່ມີຄວາມສຳຄັນ ແລະ ລ້ຳຄ່າຂອງຫວຽດນາມ ມາໃຫ້ແກ່ສະພາແຫ່ງຊາດລາວ; ໃນໂອກາດດັ່ງກ່າວ, ບັນດາກຳມາທິການຂອງສະພາແຫ່ງຊາດກໍໄດ້ມີການພົບປະແລກປ່ຽນນຳກັນຕື່ມອີກ ເພື່ອສະຫຼຸບແລະກຳນົດທິດທາງການຮ່ວມມືນຳກັນ ເປັນຕົ້ນແມ່ນສືບຕໍ່ຮ່ວມກັນຕິດຕາມກວດກາໃນຫົວຂໍ້ທີ່ພົ້ນເດັ່ນ ແລະເປັນປະໂຫຍດໃຫ້ແກ່ການຮ່ວມມືຂອງສອງປະເທດ; ຊຸກຍູ້ລັດຖະບານສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງ, ບັນດາໂຄງການຮ່ວມມືທີ່ສອງຝ່າຍລົງນາມຮ່ວມກັນ ເພື່ອຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ລະຫວ່າງສອງປະເທດ ໃຫ້ຂະ ຫຍາຍຕົວສູງຂຶ້ນສົມຄູ່ກັບການພົວພັນຮ່ວມມືດ້ານການເມືອງ; ສືບຕໍ່ຮ່ວມມືກັນສ້າງປຶ້ມ 50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດລາວ ແລະ ຫວຽດນາມ ເຊິ່ງທັງສອງຝ່າຍຈະຂຽນໃຫ້ສຳເລັດ ແລະພິມຈຳໜ່າຍໃນເດືອນກັນຍາ 2025 ໃຫ້ທັນກັບການສະເຫຼີມສະຫຼອງການສ້າງຕັ້ງສະພາແຫ່ງຊາດຫວຽດນາມຄົບຮອບ 80 ປີ ເພື່ອເປັນມໍລະດົກໃຫ້ຄົນຮຸ່ນໜຸ່ມໄດ້ສຶກສາ, ຮຽນຮູ້, ສືບທອດ ແລະ ປົກປັກຮັກສາສາຍພົວພັນແບບພິເສດລາວ-ຫວຽດນາມ ມີໜຶ່ງດຽວໃນໂລກໃຫ້ໝັ້ນຄົງຕະຫຼອດໄປ; ສະພາແຫ່ງຊາດຫວຽດນາມ ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອດ້ານຊ່ຽວຊານ, ທຶນຮອນ ແລະ ອຸປະກອນຮັບໃຊ້ຫ້ອງການເພື່ອໃຫ້ສະພາແຫ່ງຊາດລາວ ເປັນເຈົ້າພາບກອງປະຊຸມໃຫຍ່ໄອປາຄັ້ງທີ 45 ແລະ ກອງປະຊຸມອື່ນທີ່ປິ່ນອ້ອມ.

ສະຫາຍ ໂຕ ເລິມ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ຄຳເວົ້າອັນຈິບງາມຂອງປະທານສະພາແຫ່ງຊາດລາວ ທີ່ເຕັມໄປດ້ວຍໄມຕີຈິດມິດຕະພາບຖານສະຫາຍອ້າຍນ້ອງ, ສະແດງຄວາມຊົມເຊີຍຕໍ່ໝາກຜົນຂອງການເຄື່ອນໄຫວ ແລະ ການຮ່ວມມືລະຫວ່າງສອງສະພາແຫ່ງຊາດຫວຽດນາມ-ລາວ, ລາວ-ຫວຽດນາມ ໃນໄລຍະຜ່ານມາ; ສະຫາຍຍັງໄດ້ແຈ້ງສະພາບການພັດທະນາເສດຖະກິດ-ສັງຄົມຂອງຫວຽດນາມໂດຍສັງເຂບ, ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງປະເທດໃນໄລຍະຜ່ານມາ, ແລກປ່ຽນບາງສະພາບການທີ່ພົ້ນເດັ່ນຢູ່ພາກພື້ນ ແລະ ສາກົນ ພ້ອມທັງແຈ້ງຜົນການພົບປະສອງຝ່າຍຢ່າງເປັນທາງການລະຫວ່າງສອງປະທານປະເທດ ພ້ອມດ້ວຍຄະນະຂອງສອງຝ່າຍ.

**(ນາງ ອາລິນ ສຸພົມມະປະດິດ)**

## ປະເມີນ...

(ຕໍ່ຈາກໜ້າ 1)

ຫຼູບຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນໃນໄລຍະເກືອບ 10 ປີທີ່ຜ່ານມາ ໂດຍສະ ເພາະຢູ່ຂົງເຂດເສດຖະກິດ-ສັງຄົມ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາຕັ້ງຂຶ້ນ ເພື່ອເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນ ສະບັບປີ 2015 ໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດປາກົດຜົນເປັນຈິງໄດ້. ຜ່ານການດຳເນີນຢູ່ຈຸດທີ 1 ພວກເຮົາກໍໄດ້ມີການປັບປຸງເນື້ອໃນບົດສະຫຼຸບ ແລະ ຄຳຖາມເຈາະຈີ້ມໃຫ້ສອດຄ່ອງ, ແທດຕົວຈິງກວ່າເກົ່າ. ທ່ານຮອງປະທານ ຄລຊ ຮຽກຮ້ອງມາຍັງບັນດາທ່ານຜູ້ເຂົ້າຮ່ວມ ຈົ່ງເຊີດຊູຄວາມຮັບຜິດຊອບ, ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າປະກອບຄຳເຫັນຢ່າງກົງໄປກົງມາ ແລະ ກ້າຍົກບັນຫາ, ທັງນີ້ ກໍເພື່ອເຮັດໃຫ້ກອງປະຊຸມມີຜົນສຳເລັດຕາມຈຸດປະສົງຄາດໝາຍທີ່ວາງໄວ້.

ກອງປະຊຸມຄັ້ງນີ້ ໄດ້ຮັບຟັງການສະເໜີບົດສະຫຼຸບປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ 2015 ຈາກທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຮອງຫົວໜ້າກອງເລຂາ ຄລຊ ແລະ ການປະກອບຄຳເຫັນຂອງບັນດາທ່ານການນຳ ແລະ ພະນັກງານຫຼັກແຫຼ່ງຈາກກະຊວງ: ສຶກສາທິການ ແລະ ກິລາ; ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ສາທາລະນະສຸກ; ແຜນການ ແລະ ການລົງທຶນ; ການເງິນ; ກະສິກຳ ແລະ ປ່າໄມ້; ອຸດສາຫະກຳ ແລະ ການຄ້າ; ໂຍທາທິການແລະຂົນສົ່ງ; ແຮງງານ ແລະ ສະຫວັດດີການສັງຄົມ; ພາຍໃນ; ພະລັງງານ ແລະ ບໍ່ແຮ່; ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ເຕັກໂນໂລຊີ ແລະ ການສື່ສານ; ຍຸຕິທຳ; ແລະ ທະນາຄານ ແຫ່ງ ສປປລາວ ລວມທັງຂໍ້ສະເໜີຕໍ່ກັບການປັບປຸງເນື້ອໃນຂອງລັດຖະທຳມະນູນແລະຜົນກອງປະຊຸມ.

**(ອານຸສອນ ພູມມີທອນ)**

ເຝົ້າເບິ່ງ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ເພື່ອຊີວິດທີ່ປອດໄພ ໃນທ້ອງຖະໜົນ



ເລື່ອງທີ່ຈັດສັນກັ່ນຕອງມາໃຫ້ອ່ານປະຈຳວັນນີ້ ກ່ຽວໆວຽນໆຢູ່ກັບບັນຫາທີ່ມັກເກີດຂຶ້ນຢູ່ຕາມທ້ອງຖະ ໜົນ ແລະ ວິທີແກ້ໄຂ ແນໃສ່ຫຼຸດຜ່ອນອຸບັດເຫດທີ່ເຮັດໃຫ້ມີການບາດເຈັບລົ້ມຕາຍ ແລະ ສ້າງຄວາມເສຍຫາຍທາງດ້ານຊັບສິນ. ຢູ່ໄຕ້ຫວັນຂອງຈີນນັ້ນ, ອຳນາດການປົກຄອງເກາະແຫ່ງນີ້ ຍາມໃດກໍເອົາຈິງເອົາຈັງກັບຂໍ້ຫ້າມ "ເມົາແລ້ວຂັບ" ຂ່າວບອກວ່າ ກົດໝາຍວ່າດ້ວຍຄວາມປອດໄພໃນການສັນຈອນຕາມທ້ອງຖະໜົນທີ່ປະກາດໃຊ້ແຕ່ວັນທີ 1 ກໍລະກົດ 2019 ເປັນຕົ້ນມານັ້ນ ມີຂໍ້ກຳນົດທີ່ລະອຽດລະອໍກ່ຽວກັບມາດຕະການລົງໂທດຕໍ່ຜູ້ຂັບລົດໃນເວລາມີອາການມຶນເມົາຍ້ອນລິດນໍ້າຕາຜີເຜດ ໂດຍໄດ້ເພີ່ມອັດຕາຄ່າປັບໃໝສູງສຸດຈາກ 90,000 ໂດລາໄຕ້ຫວັນ (ເທົ່າກັບ ເງິນກີບລາວປະມານ 24 ລ້ານ ໃນອັດຕາແລກປ່ຽນປີ 2019) ໃນເມື່ອກ່ອນ ມາເປັນ 120,000 ໂດລາ. ນີ້ແມ່ນການປັບໃໝຕໍ່ຜູ້ລະເມີດຄັ້ງທີ 1 ແຕ່ຖ້າເປັນການກະທຳຄວາມຜິດຊໍ້າກໍຕ້ອງໄດ້ຈ່າຍຄ່າປັບໃໝເພີ່ມອີກ 90,000 ໂດລາ (ລວມເປັນ 2,010,000 ໂດລາໄຕ້ຫວັນ). ແຕ່ຖ້າຜູ້ໃດຫຼົບຫຼີກ ຫຼື ບໍ່ຍອມໃຫ້ເຈົ້າໜ້າທີ່ວັດແທກລະດັບທາດເຫຼົ້າໃນຮ່າງກາຍ, ນອກຈາກຖືກກັບໃໝເປັນເງິນແລ້ວ ຍັງຈະຖືກຖອນໃບຂັບຂີ່ຕື່ມອີກເປັນເວລາ 2 ປີ (ໃນເມື່ອກ່ອນນັ້ນ ມີພຽງ 1 ປີ). ແຕ່ເດັດໄປກວ່ານັ້ນກໍຄື ຜູ້ໂດຍສານໃນລົດທີ່ຂັບໂດຍໂຊເຟີຂີ້ເມົານັ້ນກໍຈະຊວຍໄປຕາມໆກັນ ຄືຈະຖືກປັບໃໝເປັນເງິນປະມານ 600-3,000 ໂດລາໄຕ້ຫວັນ. ຂ່າວບໍ່ໄດ້ບອກວ່າເປັນຫຍັງຈຶ່ງປັບໃໝຄົນໂດຍສານ ແຕ່ກໍພໍຄາດຄະເນອອກວ່າ ເພື່ອໃຫ້ຜູ້ໂດຍສານມີສະຕິປະຕິເສດ ເມື່ອເຫັນວ່າຜູ້ຂັບມີອາການມຶນເມົາ ການປະຕິເສດດັ່ງກ່າວ ຈະກາຍເປັນບົດຮຽນສອນໂຊເຟີຂີ້ເມົາວ່າ ຖ້າເມົາຈະເສຍລູກຄ້າ !.

ຢູ່ຫວຽດນາມນັ້ນ, ໜຶ່ງໃນບັນດາມາດຕະການເພື່ອຫຼຸດຜ່ອນອຸບັດເຫດຕາມທ້ອງຖະໜົນກໍຄືຕ້ອງໄດ້ຫຼຸດຜ່ອນຈຳນວນລົດຈັກລົງໃນບັນດາຕົວເມືອງໃຫຍ່ໆ ຫຼື ໃນຕົວເມືອງທີ່ມີຈຸດສ່ຽງເກີດອຸບັດເຫດສູງ. ຫວຽດນາມມີມະຕິທາງການທີ່ກຳນົດໃຫ້ມີການຫຼຸດຈຳນວນລົດຈັກລົງ ນັບແຕ່ປີ 2022-2025 ໃນ 5 ຕົວເມືອງດັ່ງຕໍ່ໄປນີ້ຄື: ນະຄອນຫຼວງຮ່າໂນ້ຍ, ນະຄອນຮາຍຟອງ, ນະຄອນດານັງ, ນະຄອນເກິ່ນເທີ ແລະ ນະຄອນໂຮ່ຈີມິງ. ມາດຕະການຫຼຸດຜ່ອນແມ່ນເຮັດໄປເປັນກ້າວໆ ຄືມີເຂດໃຫ້ຫຼຸດຜ່ອນ ແລະ ມີເຂດຫ້າມໃຊ້ລົດຈັກຢ່າງເດັດຂາດໃນ 5 ຕົວເມືອງທີ່ກ່າວມາຂ້າງເທິງນັ້ນ. ໄປພ້ອມໆກັບການຫຼຸດຜ່ອນຈຳນວນລົດຈັກລົງເປັນກ້າວໆ ທາງການຍັງໄດ້ສຸມໃສ່ແຜນພັດທະນາລະບົບການຂົນສົ່ງສາທາລະນະເພື່ອຫຼຸດຜ່ອນສະພາບແອອັດຕາມທ້ອງຖະໜົນ ແລະ ເພື່ອຮັບປະກັນຄວາມປອດໄພໃນການສັນຈອນ. ຂ່າວຍັງໃຫ້ຮູ້ຕື່ມວ່າ ທາງອົງການປົກຄອງ ແລະ ຄະນະກຳມະການປະຊາຊົນໃນຕົວເມືອງໃຫຍ່ 5 ແຫ່ງນີ້ ໄດ້ມີການປະສານງານ ແລະ ຮ່ວມມືກັນຢ່າງຕັ້ງໜ້າ ເພື່ອພັດທະນາລະບົບການຂົນສົ່ງສາທາລະນະໃຫ້ກວມເອົາລະຫວ່າງ 30% ຫາ 35% ຂອງລະບົບການຂົນສົ່ງທັງໝົດ ພາຍໃນປີ 2025 ຄືໃນປີໜ້ານີ້ເອງ.

TE SOLE

## ທັມພາສາ ຜ່ານສຽງຫົວ



*# ບ່າວກະບື*

ກຳມະກອນເຫງິກຫງົກຜູ້ໜຶ່ງ ຖືກຜູ້ຄຸມງານທີ່ເຫງິກຫງົກຄືກັນ ສັ່ງໃຫ້ຂຸດຂຸມຢູ່ໜ້າທາງ. "ແລ້ວຊິໃຫ້ຂ້ານ້ອຍເອົາດິນທີ່ຂຸດອອກນີ້ໄປມ້ຽນບ່ອນໃດ?" ກຳມະກອນຖາມ.

'ໂຕຢ່າເວົ້າຫຼາຍແມ້" ຜູ້ຄຸມງານຕອບ 'ໂຕກໍຂຸດອີກຂຸມໜຶ່ງ ເພື່ອມ້ຽນດິນຂັ້ນຕື່ວ".

*# BAOKBU*

An idiotic labourer was told by an equally idiotic foreman to dig a hole in the road.

"And what shall I do with the earth, sir?" asked the labourer. "Don't be daft, man", he replied. "Just dig another hole and bury it".

## ຕາມພາສາ ກາຕູນ




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພຶດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ